VATHANAVONG et al. (2021). Souphanouvong Journal of Multidisciplinary Research and Development
ISSN 2521-0653. Volume 7. Issue 1. Jan – Jun 2021. Page 79-92.

# ການພັດທະນາຫຼັກສູດເສີມສ້າງສະມັດຖະນະດ້ານການວິໄຈໃນຫ້ອງຮຽນຜ່ານລະບົບ E-Classnet ສຳຫຼັບນັກສຶກສາສຶກສາສາດ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ

**ໄພວັນ ວັດທະນາວົງ [1], ທອງທ່ຽນ ວັດທະນາວົງ [2], ອັນຊະລີ ສາລະຣັດຕະນະ [3] ແລະ ປະນັດດາ ຍອນກະໂທກ [4]**

ຄະນະສຶກສາສາດ, ມະຫາວິທະຍາໄລສຸພານຸວົງ, ສປປ ລາວ

*[1] **ຕິດຕໍ່ພົວພັນ:** ໄພວັນ ວັດທະນາວົງ, ເບີໂທ: +856 20 2235 3899,ເບີ ວອດແອັບ: +856 20 5875 4339, ອີເມວ: pvanh_vathana@yahoo.com ຄະນະສຶກສາສາດ, ມະຫາວິທະຍາໄລ ສຸພານຸວົງ, ສປປ ລາວ*

*[2] ນັກສຶກສາປະລິນຍາເອກ ສາຂາ ຫຼັກສູດ ແລະ ການສອນ ມະຫາວິທະຍາໄລຂອນແກ່ນ*

*[3] ສາດສະຈານ ດຣ. ປະຈຳຄະນະສຶກ ສາສາດ ມະຫາວິທະຍາໄລຂອນແກ່ນ*

*[4] ຜູ້ຊ່ວຍສາດສະດາຈານ ດຣ. ປະຈຳ ຄະນະສຶກສາສາດ ມະຫາວິທະຍາໄລ ຂອນແກ່ນ*

***ຂໍ້ມູນບົດຄວາມ:***

*ວັນທີສະໜັກ: 02 Mar 2021*

*ປັບປຸງສຳເລັດ:03 ພຶດສະພາ 2021*

*ຕອບ-ຮັບ:31 ພຶດສະພາ 2021*

**ບົດຄັດຫຍໍ້**

ການວິໄຈຄັ້ງນີ້ເປັນການພັດທະນາຫຼັກສູດລາຍວິຊາເສີມ ໂດຍມີຈຸດປະສົງ 1). ເພື່ອສຶກສາສະພາບ ແລະ ຄວາມຕ້ອງການຈຳເປັນໃນການພັດທະນາການວິໄຈໃນຫ້ອງຮຽນຜ່ານລະບົບ E-Classnet ແລະ 2). ເພື່ອອອກແບບ ແລະ ພັດທະນາດ້ານຄຸນນະພາບຂອງຫຼັກສູດເສີມສ້າງສະມັດຖະນະດ້ານການວິໄຈໃນຫ້ອງຮຽນ ຜ່ານລະບົບ E-Classnet ສຳຫຼັບນັກສຶກສາສຶກສາສາດ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ. ກຸ່ມຕົວຢ່າງແມ່ນອາຈານສອນ ແລະ ນັກສຶກສາຊັ້ນປີທີ່ 4 ສັງກັດຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ໃນພາກຮຽນທີ 1 ສົກສຶກສາ 2019 - 2020 ລວມທັງໝົດຈຳນວນ 56 ຄົນ. ໂດຍໃຊ້ຂະບວນວິໄຈແບບປະສົມປະສານ ແລະ ມີການຮອງຮັບພາຍໃນດ້ວຍວິທີການທາງດ້ານຄຸນນະພາບ ແລະ ປະລິມານ. ດຳເນີນການພັດທະນາຫຼັກສູດດ້ວຍ 4 ຂັ້ນຕອນ ໄດ້ແກ່: ການສຶກສາຂໍ້ມູນຖານ, ການອອກແບບ ແລະ ພັດທະນາຫຼັກສູດ, ການທົດລອງໃຊ້ຫຼັກສູດ ແລະ ການປັບປຸງຫຼັກສູດ. ເຄື່ອງມືທີ່ໃຊ້ໃນການວິໄຈໄດ້ແກ່: ແບບສອບຖາມສະພາບການ ແລະ ຄວາມຕ້ອງການຈຳເປັນ, ແບບບັນທຶກຄວາມຄິດເຫັນ. ການວິເຄາະຂໍ້ມູນແມ່ນໃຊ້ຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານ, ການວິເຄາະເອກະສານ ແລະ ຫາຄ່າດັດສະນີຄວາມຕ້ອງການຈຳເປັນ. ຜົນການວິໄຈພົບວ່າ:

1). ສະພາບການປະຕິບັດການດຳເນີນການວິໄຈໃນຊັ້ນຮຽນຢູ່ໃນລະດັບປານກາງ; ໃນຂະນະທີ່ສະພາບທີ່ຄາດຫວັງ ຫຼື ສະພາບທີ່ຄວນຈະເປັນ ຫຼື ຄວາມຕ້ອງການຈຳເປັນໃນການພັດທະນາຫຼັກສູດຢູ່ໃນລະດັບຫຼາຍ, ມີຄ່າດັດສະນີຄວາມຕ້ອງການຈຳເປັນ ($PNI_{modified}$: Modified Priority Needs Index) ເທົ່າກັບ 0.201.

2). ຫຼັກສູດເສີມສ້າງສະມັດຖະນະດ້ານການວິໄຈໃນຫ້ອງຮຽນຜ່ານລະບົບ E-Classnet ສຳຫຼັບນັກສຶກສາກຽມຝຶກຫັດງານ ທີ່ອອກແບບປະກອບດ້ວຍ ໝວດການຮຽນຮູ້ 7 ໝວດ ແລະ 10 ແຜນການຈັດການຮຽນຮູ້ ທີ່ໃຊ້ການຮຽນຮູ້ຜ່ານລະບົບ E-Classnet ແລະ ຫຼັກສູດດັ່ງກ່າວໄດ້ຮັບການປະເມີນຈາກຜູ້ຊ່ຽວຊານຈຳນວນ 5 ທ່ານ ໄດ້ຄ່າດັດສະນີຄວາມສອດຄ່ອງໂດຍພາບລວມເທົ່າ 0.82 ແລະ ດັດສະນີຄວາມເໝາະສົມໂດຍພາບລວມໃນລະດັບຫຼາຍ, ສະຫຼຸບວ່າ ຫຼັກສູດນີ້ມີຄຸນນະພາບພ້ອມທີ່ຈະນຳໄປໃຊ້ໄດ້ຈິງໃນໂອກາດຕໍ່ໄປ

**ຄຳສັບສຳຄັນ:**

*ການພັດທະນາຫຼັກສູດ, ສະມັດຖະນະ, ຄວາມຕ້ອງການຈຳເປັນ, ການວິໄຈໃນຫ້ອງຮຽນ, ລະບົບ E-Classnet*

# The Curriculum Development of Enhancing Research in Classroom Competence through E-classnet for Teacher Training Student at Faculty of Education, Souphanouvong University

**Phaivanh VATHANAVONG [1], Thongthiane VATHANAVONG [2], Unchalee SANRATTANA[3] and Panadda YUANKRATHOK[4]**

*Faculty of Education, Souphanouvong University, Lao PDR*

*[1]Corresponding Author:*
*Phaivanh VATHANAVONG, Tel: +856 20 2235 3899,WhatsApp: +856 20 5875 4339, E-mail: pvanh_vathana@yahoo.com*
*Faculty of Education, Souphanouvong University, Lao PDR*

*[2] Ph.D candidate in curriculum and instruction, Khonekaen University*
*[3] Professor Dr. at Khonekaen University*
*[4] Assistant Professor Dr. at Khonekaen University*

***Article Info:***
*Submitted: Mar 02, 2021*
*Revised: May 03, 2021*
*Accepted: May 31, 2021*

**Abstract**

This research was the development of a supplementary curriculum, which is part of the research task for doctoral studies. The purposes of this research were to: 1) to study the state of the problems and needs assessment for research in classroom through the E-Classnet system and 2). To design and examine the quality of the curriculum to enhancing research in classroom competence through the E-Classnet system for teacher training student at faculty of education, Souphanouvong University. Four steps were used as the development process of the curriculum, including a study of the fundamental data, design and examine quality of the training curriculum, implementation and improvement of the training curriculum respectively. Using mixed methods research process and internal support with qualitative and quantitative methods. The samples were teachers and 4th year students under the faculty of education, Souphanouvong University in the first semester of the academic year 2020-2021, including 56 people. Instruments used to collect the data were questionnaire on the state and needs assessment, comment record form. The statistical analysis was percentage, mean, standard deviation, contents analysis, modified priority needs index ($PNI_{modified}$). The results of this research were as follows:

1). The state of practicing on research in classroom was moderate ; While the expected or expected state or needs assessment for curriculum development is at a much-level by the PNI = 0.201. Comparing the differences in needs assessment for Curriculum development by gender, age, programs, the teaching experience, the advisors and the assistants' advisors as a whole did not differ at the .05 level with statistical significance.

2). The Curriculum of enhancing research in Classroom competence through E-classnet for Teacher training students at Faculty of Education, Souphanouvong University were designed comprising of 7 articles and 10 lesson plans that used through the E-Classnet system. And, 0.82 of the consistency index with much-levels of the suitability evaluation from 5 experts. Therefore, this curriculum had much quality and to be implemented in the next step.

**Keyword:** *curriculum development, competence, needs assessment, research in classroom, E-classnet.*

## 1. ພາກສະເໜີ

ຄວາມກ້າວໜ້າທາງດ້ານເທັກໂນໂລຍີຂໍ້ມູນຂ່າວສານ (Information Communication Technology ຫຼື ICT) ໃນສັງຄົມປັດຈຸບັນເຮັດໃຫ້ທົ່ວທຸກມຸມໂລກສາມາດຕິດຕໍ່ສື່ສານ, ຮັບຊາບຂໍ້ມູນຂ່າວສານໄດ້ຢ່າງວ່ອງໄວຜ່ານເທັກໂນໂລຍີທີ່ທັນສະໄໝ ແລະ ເຄື່ອງມືດິຈິຕອນ (Digital) ທີ່ຫຼາກຫຼາຍ ທັງຄອມພິວດຕີໂນດບຸກ (Notebook Computer) ແທັບເລັດ (Tablet), ໄອແພັດ (Ipad), ໄປໂຟນ (Iphone), ສະມາດໂຟນ (Smart hone) ເຊິ່ງເປັນເຄື່ອງມືສື່ສານທີ່ມີປະສິດທິພາບໃນການເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານໃນຮູບແບບຂແງດິຈິຕອນທາງດ້ານວຽກງາວິຊາການ, ຄວາມບັນເທິງ, ສັງຄົມ ແລະ ອື່ນໆ ອີກຢ່າງຫຼວງຫຼາຍ ທີ່ກໍ່ໃຫ້ເກີດບັນຫາການປະເຊີນໜ້າກັບຂໍ້ມູນອັນມະຫຶມາທີ່ບໍ່ສາມາດບໍລິຫານຈັດການຂໍ້ມູນ ແລະ ໃຊ້ຂໍ້ມູນເຫຼົ່ານັ້ນໃຫ້ເກີດຜົນປະໂຫຍດ; ໃນຂະນະດຽວກັນການແຂ່ງຂັນ ແລະ ຄວາມຮ່ວມມືທີ່ເກີດຂຶ້ນຢ່າງວ່ອງໄວຢ່າງໜ້າປະຫຼາດໃຈ (ເບນຈະວັນ ຖະໜອມໄຊທະວັດ, ຜ່ອງສີ ວານິດສຸພາວົງ, ວຸດທິໄຊ ນຽມເທດ ແລະ ໜັດຖະວິດ ພົດຈະນະຕັນຕິ, ພສ. 2559). ສຳລັບໃນພາການສຶກສາໄດ້ເນັ້ນເຖິງຄວາມສຳຄັນຂອງການບູລະ

ນາການດ້ານເທັກໂນໂລຢີຂໍ້ມູນຂ່າວສານ ຫຼື ໄອຊີທີ ເຂົ້າໃນການຈັດການຮຽນການສອນໃນປັດຈຸບັນເຫັນວ່າມີມີຄວາມສໍາຄັນ ແລະ ຈໍາເປັນທີ່ສຸດ ດັ່ງທີ່ ວິຈານພານິດ (ພສ. 2556) ທີ່ໄດ້ສະເໜີວ່າການຮຽນໃນຍຸກສະໄໝໃໝ່ນີ້ບໍ່ພຽງແຕ່ເພື່ອໃຫ້ໄດ້ຄວາມຮູ້ເທົ່ານັ້ນ, ຕ້ອງໃຫ້ເກີດທັກສະ (Skill) ໄປພ້ອມ. ການຮຽນເພື່ອໃຫ້ໄດ້ທັກສະທີ່ສາມາດນໍາໄປໃຊ້ໄດ້ນັ້ນໂດຍສະເພາະທັກສະແຮງບັນດານໃຈ ແລະ ທັກສະການອ່ານອອກຂຽນໄດ້ຍັງບໍ່ທັນພຽງພໍ ຈໍາເປັນຕ້ອງບົ່ມເພາະ ແລະ ຝຶກຝົນ, ສໍານຶກຄວາມເປັນຄົນດີຈຶ່ງຖືວ່າເປັນມະນຸດທີ່ແທ້ຈິງ. ທັກສະດັ່ງກ່າວເອີ້ນວ່າທັກສະການຮຽນຮູ້ແຫ່ງສະຕະວັດທີ 21 ເຊິ່ງປະກອບດ້ວຍ: ທັກສະ 3Rs ໄດ້ແກ່ ທັກສະການອ່ານ (Reading), ທັກສະການຂຽນ (Writing) ແລະ ທັກສະດ້ານຄະນິດສາດ(Arithmetic) ເຊິ່ງທັງໝົດນັ້ນບໍ່ໝາຍຄວາມວ່າການອ່ານອອກ, ຂຽນໄດ້ ແລະ ຄໍານວນຄະນິດສາດເປັນກໍມີຄວາມຮູ້ພຽງພໍແລ້ວເທົ່ານັ້ນ ແຕ່ຕ້ອງລວມເຖິງການເກີດທັກສະຮັກການອ່ານ, ອ່ານແລ້ວເກີດມີຄວາມສະໜຸກສະໜານ, ອ່ານແລ້ວສະມາດຈັບໃຈຄວາມ ແລະ ສາມາດສະຫຼຸບໃຈຄວາມເປັນ. ສໍາລັບການຂຽນກໍຕ້ອງສາມາດຂຽນສື່ສານໄດ້, ຫຍໍ້ຄວາມໝາຍໄດ້ ແລະ ສາມາດສະຫຼຸບໃຈຄວາມທີ່ສໍາຄັນໄດ້ດ້ວຍການຂຽນທີ່ຫຼາກຫຼາຍຮູບແບບ. ສ່ວນທັກສະການຄິດນັ້ນ ຄວນເນັ້ນໃຫ້ເກີດທັກສະການຄິດແບບຮູບປະທໍາ 7Cs ໄດ້ແກ່: ທັກສະການຄິດຢ່າງມີວິຈາລະນະ ຍານ ແລະ ທັກສະໃນການແກ້ບັນຫາ (Critical Thinking & Problem Solving), ທັກສະການສ້າງສັນ ແລະ ສ້າງນະວັດຕະກໍາ (Creativity & Innovation), ທັກສະດ້ານຄວາມຮ່ວມມື, ການເຮັດວຽກເປັນທີມ ແລະ ພາວະຜູ້ນໍາ (Collaboration, Teamwork and Leadership), ທັກສະຄວາມເຂົ້າໃຈຕ່າງວັດທະນະທໍາແລະ ຕ່າງຂະບວນທັດ (Cross-Cultural Understanding), ທັກສະດ້ານການສື່ສານ, ຂໍ້ມູນຂ່າວສານ ແລະ ການຮູ້ເທົ່າທັນສື່ (Communication, Information & Media Literacy), ທັກສະດ້ານຄອມພິວເຕີ, ເທັກໂນໂລຢີຂໍ້ມູນຂ່າວສາສນ ແລະ ການສື່ສານ (Computer & ICT Literacy), ທັກສະຊີວິດ ແລະ ການງານດ້ານອາຊີບ (Career & Learning Skill). ໂດຍທັກສະການຮຽນຮູ້ເຫຼົ່ານັ້ນຂຶ້ນຢູ່ກັບການປ່ຽນແປງ ແລະ ເປັນຜູ້ສ້າງການປ່ຽນແປງນັ້ນໄດ້ດ້ວຍ. ສະນັ້ນ, ເມື່ອພິຈາລະນາຈະເຫັນໄດ້ຊັດເຈນວ່າການກໍ່ໃຫ້ເກີດການປ່ຽນແປງທັກສະເຫຼົ່ານັ້ນຕ້ອງຜ່ານກະບວນການວິໄຈໃນຫ້ອງຮຽນ ແລະ ການວິໄຈໃນຫ້ອງຮຽນກໍແມ່ນທັກສະໜຶ່ງທີ່ນອນໃນທັກສະແຫ່ງສະຕະວັດທີ່ 21 ທີ່ຄູຜູ້ສອນທຸກຄົນຄວນປະຕິບັດ ເນື່ອງຈາກວ່າການວິໄຈແບບປະຕິບັດການໃນຊັ້ນຮຽນມີລັກສະນະທີ່ສໍາຄັນຄື: ມີການດໍາເນີນງານທີ່ເປັນວົງຈອນຕໍ່ເນື່ອງ, ມີຂະບວນການເຮັດວຽກແບບມີສ່ວນຮ່ວມ ແລະ ເປັນຂະບວນການທີ່ເປັນສ່ວນໜຶ່ງຂອງວຽກງານປົກກະຕິຂອງຄູຜູ້ສອນ ເພື່ອໃຫ້ໄດ້ຂໍ້ຄົ້ນພົບກ່ຽວກັບການແກ້ບັນຫາທີ່ສາມາດປະຕິບັດຕົວຈິງໄດ້, ການນໍາແນວທາງການວິໄຈໃນຫ້ອງຮຽນໄປນໍາໃຊ້ໃນການພັດທະນາການຮຽນການສອນ ເຊັ່ນ: ຄູຜູ້ສອນຕ້ອງການຊອກຫາວິທີການແກ້ໄຂບັນຫາທີ່ເກີດຂຶ້ນໃນຫ້ອງຮຽນໃນຂະນະທີ່ດໍາເນີນການຈັດການຮຽນການສອນຢູ່ດ້ວຍຂະບວນການວິໄຈທີ່ວົງຈອນເຮັດວຽກຢ່າງຕໍ່ເນື່ອງ ແລະ ການສະທ້ອນຜົນການເຮັດວຽກຂອງຕົນເອງ ໂດຍມີຈຸດມຸ່ງໝາຍເພື່ອພັດທະນາການຮຽນການສອນໃຫ້ເກີດປະໂຫຍດສູງສຸດຕໍ່ຜູ້ຮຽນອີກທັງເປັນຂະບວນການວິໄຈທີ່ສາມາດດໍາເນີນການໄດ້ຢ່າງທັນທີທັນໃດ ໂດຍຜູ້ສອນນໍາເອົາວິທີການແກ້ບັນຫາທີ່ຕົນເອງຄົ້ນຄິດຂຶ້ນໄປທົດລອງໃຊ້ກັບຜູ້ຮຽນທັນທີ ແລະ ດໍາເນີນການປັບປຸງແກ້ໄຂ ພັດທະນາຜູ້ຮຽນຄວບຄູ່ກັນໄປກັບກິດຈະກໍາການຮຽນການສອນ, ການວິໄຈ ແລະ ພັດທະນາຈຶ່ງເກີດຂຶ້ນໃນການປະຕິບັດງານປົກກະຕິຂອງຄູຜູ້ສອນ (ສຸວິມົນ ວ່ອງວານິດ, ພສ. 2555) ແລະ ເປັນແນວທາງໃນການເສີມສ້າງສະມັດຖະນະຂອງຄູໃນສະຕະວັດທີ 21 ອີກດ້ວຍ.

ນອກຈາກນີ້, ຂະບວນການຈັດການຮຽນການສອນຂອງຄູໃນຍຸກສະຕະວັດທີ 21 ໄດ້ເນັ້ນໜັກໃຫ້ຜູ້ສອນຕ້ອງໃຊ້ການຈັດການຮຽນການສອນທີ່ບູລະນາການດ້ານ ໄອ ຊີ ທີ ເຂົ້າມາມີສ່ວນຮ່ວມໃນການຈັດການຮຽນການສອນຢ່າງເປັນລະບົບ ແລະ ຕໍ່ເນື່ອງ ເຊິ່ງ ໄອ ຊີ ທີ ສາມາດຊ່ວຍໃນການຈັດການຮຽນການສອນໃຫ້ຜູ້ຮຽນເກີດທັກສະການຮຽນໄດ້ຢ່າງມີປະສິດທິພາບ ດັ່ງທີ່ ສາມມິຕິ ສຸກບັນຈິງ (ພສ. 2554) ໄດ້ພັດທະນາບົດຮຽນ E-learning ລາຍວິຊາສະແດງສື່ ເຊິ່ງຜົນການວິໄຈພົບວ່າ ຜົນການຮຽນຫຼັງການຮຽນສູງກວ່າກ່ອນຮຽນ ແລະ ນັນທິດາ ວັດຍິ້ມ, ເສົາວະລັກ ວັດຊີມ ແລະ ອະພັດສະລິນ ມະໂນ (2560: ບົດຄັດຫຍໍ້) ໄດ້ເຮັດການວິໄຈການສອນໂດຍໃຊ້ການຈັດການຮຽນການສອນໂດຍໃຊ້ສື່ອີເລັກໂຕຣນິກ (E-learning) ຜົນການວິໄຈພົບວ່າ: ການຈັດການຮຽນການສອນໂດຍໃຊ້ສື່ອີເລັກໂຕຣນິກເປັນວິທີການສອນທີ່ມຸ່ງເນັ້ນພັດທະນາຜູ້ຮຽນໃຫ້ມີທັກສະແຫ່ງສະຕະວັດທີ 21 ແລະ ເປັນວິທີການທີ່ສົ່ງ ເສີມໃຫ້ຜູ້ຮຽນ ຮຽນຮູ້ດ້ວຍຕົນເອງຕາມຄວາມຕ້ອງການຂອງຕົນເອງ ແລະ ສອດຄ່ອງກັບສະພາບສັງຄົມໃນປັດຈຸບັນທີ່ຄວາມຮູ້ສາມາດສືບຄົ້ນໄດ້ຢ່າງສະດວກສະບາຍທາງອິນເຕີເນັດ ແລະ ວິທີການຮຽນການສອນດ້ວຍສື່ອີເລັກໂຕຣນິກ ຫຼື E-learning ເປັນການສະໜັບສະໜູນການຮຽນຮູ້ແບບເລິກເຊິ່ງ (Active learning) ເຊິ່ງເປັນວິທີການທີ່ຊ່ວຍຝຶກທັກສະການຄິດ ແລະ ຄວາມສາມາດນໍາໄປໝູນໃຊ້ໄດ້ດີກວ່າການຮຽນການສອນໂດຍທົ່ວໄປ.

ນອກຈາກນີ້, ການວິໄຈໃນຫ້ອງຮຽນ ເປັນແນວທາງການດໍາເນີນການວິໄຈເພື່ອພັດທະນາ ການຮຽນການສອນເພື່ອແກ້ໄຂ

ບັນຫາ ຫຼື ກິດຈະ ກຳການຮຽນການສອນທີ່ມີບັນຫາສຳລັບນັກຮຽນ, ດ້ວຍການພັດທະນາ, ອອກແບບສື່ນະວັດຕະກຳ, ທົດລອງໃຊ້ນະວັດຕະກຳການຮຽນຮູ້ເພື່ອນຳຜົນການວິໄຈມາປັບປຸງຄຸນນະພາບການຮຽນການສອນ ໃຫ້ມີຄຸນນະພາບ ແລະ ມີປະສິດທິພາບເພີ່ມຂຶ້ນ. ດັ່ງນັ້ນ, ຄູຜູ້ສອນຕ້ອງເປັນນັກວິໄຈທີ່ປະຕິບັດການວິໄຈໃນຫ້ອງຮຽນ ເຊິ່ງມີຄວາມຈຳເປັນດ້ວຍເຫດຜົນຫຼາຍປະການທີ່ກ່ຽວຂ້ອງກັບຍຸດທະສາດການພັດທະນາຄູ ແລະ ບຸກຄະລາກອນທາງການສຶກສາຂອງ ສປປ ລາວ ເຖິງປີ 2025 ເຊິ່ງໄດ້ລະບຸໄວ້ວ່າ: ມາດຕະຖານດ້ານວິຊາຊີບຄູຂອງຄູລາວຕາມຂໍ້ກຳນົດຂອງກົມສ້າງຄູ ຄືຄູເປັນຜູ້ທີ່ມີຄວາມຮູ້ໃນດ້ານການວິໄຈທາງການສຶກສາ, ຮູ້ຈັກໃຊ້ຂະບວນການວິໄຈໃນການແກ້ບັນຫາໃນຫ້ອງຮຽນ ແລະ ມີຄວາມສາມາດໃນການເຮັດວິໄຈເພື່ອພັດທະນາຜົນການຮຽນຂອງນັກຮຽນ; ນອກຈາກນີ້ ທາງດ້ານການປະກັນຄຸນນະພາບການສຶກສາພາຍນອກຍັງກ່ຽວຂອງດ້ານຕົວຄູວ່າຕ້ອງມີມາດຕະຖານການຈັດການຮຽນການສອນທີ່ຖືເອົານັກຮຽນເປັນໃຈກາງ ເຊິ່ງຜູ້ສອນຕ້ອງມີຄວາມຮູ້ຄວາມເຂົ້າໃຈ ແລະ ວິທີການລົງມືປະຕິບັດການວິໄຈໃນຫ້ອງຮຽນ (ກະຊວງສຶກສາທິການ ແລະ ກິລາ, 2015)

ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ໃນຖານະເປັນສະຖາບັນການສຶກສາຊັ້ນສູງທີ່ເຮັດໜ້າທີ່ໃນການຜະລິດຄູ ໄດ້ໃຫ້ຄວາມສຳຄັນໃນການສົ່ງເສີມອາຈານ ແລະ ນັກສຶກສາປີສຸດທ້າຍທີ່ກຽມລົງຝຶກຫັດງານໄດ້ໃຊ້ຂະບວນການວິໄຈໃນຫ້ອງຮຽນ ເພື່ອພັດທະນາວິຊາຊີບ ແລະ ຜູ້ຮຽນຢ່າງຈິງຈັງ. ອີງຄວາມຮູ້ທີ່ໄດ້ຮັບຈາກການວິໄຈໃນຫ້ອງຮຽນທີ່ໄດ້ຮັບຈາກການລົງມືປະຕິບັດຈິງຈະສົ່ງຜົນໂດຍກົງຕໍ່ການພັດທະນານັກຮຽນ ໂດຍກຳນົດໃນນະໂຍບາຍມາດຕະຖານການປະກັນຄຸນນະພາບພາຍໃນ ແລະ ພາຍນອກ ໂດຍອາຈານ ແລະ ນັກສຶກສາທີ່ຈະຈົບໄປຕ້ອງມີຄວາມຮູ້ ແລະ ຄວາມເຂົ້າໃຈໃນຂະບວນການວິໄຈໃນຫ້ອງຮຽນ ໂດຍຜ່ານສະພາບການດຳເນີນກິດຈະກຳການຮຽນການສອນທັງໃນ ແລະ ນອກສະຖາບັນ. ແຕ່ສະພາບການທີ່ເກີດຂຶ້ນໃນຂະບວນການວິໄຈໃນຫ້ອງຮຽນກັບນັກສຶກສາປີສຸດທ້າຍທີ່ກຽມລົງຝຶກຫັດງານຄືຍັງຂາດຄວາມ, ທັກສະໃນການດຳເນີນການວິໄຈ, ການໃຊ້ສະຖິຕິເພື່ອວິເຄາະຂໍ້ມູນ, ຂາດປະສົບການ ແລະ ຍັງບໍ່ເຫັນຄຸນຄ່າ ແລະ ປະໂຫຍດຂອງການວິໄຈໃນຫ້ອງຮຽນ (ຄະນະສຶກສາສາດ, 2015). ນອກຈາກນີ້, ການວິໄຈຍັງເປັນນະວັດຕະກຳທີ່ສຳຄັນໃນການສ້າງຄວາມກ້າວໜ້າທາງວິຊາການ ເພື່ອກໍ່ໃຫ້ເກີດຜົນຜະລິດ ແລະ ສິ່ງປະດິດທີ່ຄິດຄົ້ນໂດຍຜູ້ສອນທີ່ສ້າງສັນອັນນຳໄປສູ່ສັງຄົມແຫ່ງຄວາມຮູ້ (knowledge – based society) ເຊິ່ງເປັນສັງຄົມຂອງວິຊາຊີບຄູທີ່ມີການໃຊ້ຄວາມຮູ້ໂດຍມີການວິໄຈຫ້ອງຮຽນເປັນພື້ນຖານເຊິ່ງການຝຶກຫັດງານ ຫຼື ຝຶກປະສົບການວິຊາຊີບຄູຂອງນັກສຶກສາປີສຸດທ້າຍຂອງຄະນະສຶກສາສາດ ກຳນົດໃຫ້ມີການວິໄຈໃນຫ້ອງຮຽນໃຫ້ນັກສຶກສາໄດ້ຝຶກປະຕິບັດຈິງໃນການນຳຄວາມຮູ້, ຄວາມເຂົ້າໃຈ, ທັດສະດີ ແລະ ທັກສະການວິໄຈໃນຫ້ອງຮຽນມາພັດທະນາວິທີສອນ ຫຼື ເທັກນິກການສອນໃນເວລາລົງຝຶກຫັດງານ, ອັນເປັນແນວທາງໃນການສ້າງແຮງຈູງໃຈໃຫ້ນັກຮຽນຢາກຮູ້ຢາກເຫັນ, ພັດທະນາພຶດຕິກຳການຮຽນຮູ້ຂອງຜູ້ຮຽນ ແລະ ຊຸກຍູ້ໃຫ້ຜູ້ຮຽນມີຜົນການຮຽນທີ່ເພີ່ມຂຶ້ນ ອີກດ້ານໜຶ່ງກໍເປັນການສ້າງບັນຍາກາດການຮຽນທີ່ເອື້ອອຳນວຍໃຫ້ເກີດການຮຽນຮູ້ຢ່າງມີປະສິດທິພາບ. ພ້ອມດຽວກັນນີ້ໃນຂໍ້ມູນທີ່ເປັນປະຈັກໃຫ້ເຫັນຢ່າງຊັດເຈນ ແລະ ທີ່ສະໜັບສະໜູນວ່າການວິໄຈໃນຫ້ອງຮຽນຄື ສະມັດຖະນະທີ່ຈຳເປັນສຳລັບຄູແຫ່ງສະຕະວັດທີ 21 (Field, 2007; Mclean, 2008; ເຊົາວະລັດ, ພສ. 2552; ອອນອຸມາ ຮຸ່ງເຮືອງວະນິດສະກຸນ,ພສ. 2556 ແລະ ຂວັນດາວ ແຈ່ມແຈ້ງ, ພສ. 2556) ທີ່ໃຊ້ຜົນຂອງການວິໄຈໃນຫ້ອງຮຽນເພື່ອພັດທະນາຜູ້ຮຽນໄດ້ຢ່າງມີປະສິດທິຜົນສູງ ແລະ ເພື່ອໃຫ້ຜູ້ຮຽນເກີດການຮຽນ ຮູ້ໄດ້ດີຍິ່ງຂຶ້ນຄືການບູລະການຈັດການຮຽນການສອນດ້ວຍສື່ເທັກໂນໂລຍີຈະເປັນການຊ່ວຍໃນການສ້າງການຮຽນຮູ້ໄດ້ດີ.

ຈາກບັນຫາ ແລະ ສະພາບທີ່ກ່າວມາເບື້ອງຕົ້ນຈຶ່ງເຫັນຄວາມຈຳເປັນຂອງການພັດທະນາສະມັດຖະນະການວິໄຈໃນຫ້ອງຮຽນໃຫ້ແກ່ນັກສຶກສາປີສຸດທ້າຍຂອງະນສຶກສາສາດມະຫາວິທະຍາໄລສຸພານຸວົງ. ສະນັ້ນ, ຄະນະຜູ້ຄົ້ນຄວ້າຈຶ່ງສົນໃຈທີ່ຈະດຳເນີນການວິໄຈ “ການພັດທະນາຫຼັກສູດເສີມສ້າງສະມັດຖະນະດ້ານການວິໄຈໃນຫ້ອງຮຽນຜ່ານລະບົບ E-Classnet ສຳຫຼັບນັກສຶກສາສຶກສາສາດ ຄະນະສຶກສາສາດມະຫາວິທະຍາໄລສຸພານຸວົງ” ເພື່ອໃຫ້ນັກສຶກສາສຶກສາສາດປີສຸດທ້າຍເກີດຄວາມຮູ້ຄວາມເຂົ້າໃຈ, ທັກສະ ແລະ ຂະບວນການວິໄຈໃນຫ້ອງຮຽນ ພ້ອມທັງເປັນແນວທາງໃນການພັດທະນາອົງຄວາມຮູ້ດ້ານການວິໄຈໃນຫ້ອງຮຽນໃນຖານະຄູສອນໃນອະນາຄົດໃຫ້ມີປະສິດທິພາບຕໍ່ໄປ.

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງ ຄື: 1). ເພື່ອສຶກສາສະພາບ ແລະ ຄວາມຕ້ອງການຈຳເປັນໃນການພັດທະນາການວິໄຈໃນຫ້ອງຮຽນຜ່ານລະບົບ E-Classnet ແລະ 2). ເພື່ອອອກແບບ ແລະ ພັດທະນາດ້ານຄຸນນະພາບຂອງຫຼັກສູດເສີມສ້າງສະມັດຖະນະດ້ານການວິໄຈໃນຫ້ອງຮຽນ ຜ່ານລະບົບ E-Classnet ສຳຫຼັບນັກສຶກສາສຶກສາສາດ ຄະນະສຶກສາສາດມະຫາວິທະຍາໄລສຸພານຸວົງ.

## 2. ອຸປະກອນ ແລະ ວິທີການ

### 2.1 ວິທີດຳເນີນການສຶກສາ

#### 2.1.1 ການພັດທະນາຫຼັກສູດ

**1). ຄວາມໝາຍຂອງຫຼັກສູດ:** ມີນັກການສຶກສາໄດ້ນິຍາມ

ຄວາມໝາຍຂອງຫຼັກສູດເອົາໄວ້ຢ່າງຫຼວງຫຼາຍ ພົບວ່າ ສ່ວນຫຼາຍຄວາມໝາຍຂອງຫຼັກສູດໃຊ້ຄຳທີ່ກົງກັບພາສາອັງກິດວ່າ "Curriculum" ທີ່ມີຮາກສັບມາຈາກພາສາລາຕິນວ່າ "Currere" ເຊິ່ງໝາຍເຖິງຂະບວນການທາງດ້ານວິຊາ (Course) ແລະ ຫຼາຍທ່ານໄດ້ໃຫ້ຄວາມໝາຍໄວ້ ເຊັ່ນ:

ແກຣນ ວິກກິນ ແລະ ເຈ ແມັກໄທ້ເຍ່ (Grant Wiggins & Jay McTighe, 1998) ໄດ້ໃຫ້ຄວາມໝາຍກ່ຽວກັບຫຼັກສູດວ່າເປັນພິມຂຽວເພື່ອການຮຽນຮູ້ທີ່ເກີດຈາກການກຳນົດມາດຕະຖານຂອງເນື້ອໃນ ແລະ ມາດຕະຖານຄວາມສາມາດຂອງຜູ້ຮຽນ (Content and Performance Standards) ເພື່ອນຳໄປສູ່ການພັດທະນາແຜນການຮຽນຮູ້. ສ່ວນ ມາກ ແລະ ວິລລິສ (Marsh & Willis, 2007) ໄດ້ສະ ຫຼຸບຄວາມໝາຍຂອງຫຼັກສູດໄວ້ 7 ປະການ ໄດ້ ແກ່: 1. ຫຼັກສູດຄືວິຊາຄວາມຮູ້ທີ່ຖາວອນບໍ່ປ່ຽນ ແປງ (Curriculum is as "permanent"), 2. ຫຼັກສູດຄືວິຊາທີ່ມີປະໂຫຍດຕໍ່ການດຳລົງຊີວິດໃນສັງຄົມປັດຈຸບັນຫຼາຍທີ່ສຸດ (Curriculum is those subjects are the most useful for living in contemporary society), 3. ຫຼັກສູດແມ່ນແຜນການຈັດການຮຽນຮູ້ທັງໝົດທີ່ໂຮງຮຽນຮັບຜິດຊອບ (Curriculum is all planned learning for which the school responsible), 4. ແມ່ນປະສົບການທັງໝົດທີ່ຜູ້ຮຽນໄດ້ຮັບພາຍໃຕ້ການແນະນຳຂອງໂຮງຮຽນ (Curriculum is all the experiences learners have under the guidance of the school), 5. ແມ່ນປະສົບການທັງໝົດທີ່ຜູ້ຮຽນໄດ້ຮັບຈາກລາຍວິຊາກ່ຽວກັບການດຳລົງຊີວິດ (Curriculum is the totally of learning the experience that learners have in the course of living), 6. ແມ່ນສິ່ງທີ່ນັກຮຽນໄດ້ຮັບຈາກການເຮັດວຽກຮ່ວມກັບຄອມພິວເຕີ ແລະ ເຄືອຂ່າຍຕ່າງ ໆ (Curriculum is what the student conducts from working with the computer and its various network, such as the internet) ແລະ 7. ແມ່ນການຕັ້ງຄຳຖາມກ່ຽວກັບອຳນາດ ແລະ ການຄົ້ນຫາມຸມມອງທີ່ສັບຊ້ອນຂອງສະຖານະການຂອງມະນຸດ (Curriculum is the questioning of authority and the searching of complex view of human situation).

ດັ່ງນັ້ນ, ສະຫຼຸບໄດ້ວ່າ ຫຼັກສູດໝາຍເຖິງແຜນການຈັດການຮຽນຮູ້ໄລຍະຍາວ (Long-term lesson plan) ທີ່ອອກແບບ ແລະ ສະແດງຈຸດມຸ່ງໝາຍ, ເນື້ອໃນບົດຮຽນ, ກິດຈະກຳ, ການຈັດປະສົບການຮຽນຮູ້ ແລະ ວິທີການປະເມີນຜົນຂອງແຕ່ລະວິຊາ ເຊິ່ງຈັດຂຶ້ນທັງພາຍໃນ ແລະ ພາຍນອກສະຖານສຶກສາ ເພື່ອສົ່ງເສີມ ແລະ ສະໜັບສະໜູນໃຫ້ຜູ້ຮຽນເກີດການພັດທະນາຕົນເອງດ້ານຄວາມຮູ້, ທັກສະ, ທັດສະນະຄະຕິ ແລະ ປ່ຽນແປງພຶດຕິກຳໄປໃນທິດທາງທາງທີ່ດີຕາມຈຸດໝາຍທີ່ກຳນົດໄວ້.

**2). ປະເພດຂອງຫຼັກສູດ:** ມີຄວາມເຊື່ອວ່າຫຼັກສູດໄດ້ຮັບອິດທິພົນຈາກປັດຊະຍາການສຶກສາ ແລະ ຈິດຕະວິທະຍາການສຶກສາ ເຊິ່ງໃນປັດຈຸບັນຫຼັກສູດແບ່ງອອກເປັນ 5 ປະເພດ ດັ່ງທີ່ທ່ານ ທາບາ (1962); ວິໄຊ ວົງໃຫຍ່ (ພສ. 2537) ແລະ ທາລົງ ບົວສີ (ພສ. 2542) ໄດ້ສະຫຼຸບໄວ້ວ່າ: 1. ຫຼັກສູດເນື້ອໃນວິຊາ ຫຼື ຫຼັກສູດລາຍວິຊາ (The Subject matter Curriculum) ເປັນຫຼັກສູດທີ່ເນື້ອໃນວິຊາເປັນຫຼັກ. ກິດຈະກຳການຮຽນການສອນໃນຫຼັກສູດນີ້ເປັນການຖ່າຍທອດເນື້ອໃນບົດຮຽນຄວາມຮູ້ຂອງວິຊາຕ່າງ ໆ ເນື້ອໃນແຕ່ລະວິຊາຖືກຈັດສັນໄວ້ເພື່ອການຖ່າຍທອດຢ່າງເປັນລະບົບ; 2. ຫຼັກສູດເພື່ອຊີວິດ ແລະ ສັງຄົມ ເປັນຫຼັກສູດທີ່ມຸ່ງເນັ້ນແກ້ໄຂຂໍ້ບົກພ່ອງຂອງຫຼັກສູດທີ່ຜ່ານມາດ້ວຍການລວບລວມຂໍ້ມູນໃຫ້ເປັນອັນໜຶ່ງອັນດຽວກັນ ໂດຍຍຶດກິດຈະກຳຕ່າງ ໆ ຂອງສັງຄົມເປັນຫຼັກ, ເປັນຫຼັກສູດທີ່ມຸ່ງເນັ້ນໃຫ້ຜູ້ຮຽນໄດ້ນຳໄປໃຊ້ໃນຊີວິດປະຈຳວັນໝາຍຄວາມວ່າເປັນຫຼັກສູດທີ່ເຊື່ອມໂຍງລະຫວ່າງວິຊາໃນຫຼັກສູດກັບຊີວິດຈິງຂອງຜູ້ຮຽນ; 3. ຫຼັກສູດກິດຈະກາ ຫຼື ຫຼັກສູດປະສົບການ(Activity or Experience Curriculum) ເປັນຫຼັກສູດທີ່ຍຶດຖືຕາມປະສົບການ ແລະ ກິດຈະກຳເປັນຫຼັກ, ມຸ່ງເນັ້ນການສົ່ງເສີມການຮຽນການສອນດ້ວຍວິທີການແກ້ບັນຫາ, ຜູ້ຮຽນໄດ້ຮຽນຮູ້ດ້ວຍການລົງມືກະທຳ (learning by doing); 4. ຫຼັກສູດແກນ (Core Curriculum) ເປັນຫຼັກສູດທີ່ລວບລວມເອົາຈຸດເດັ່ນຂອງຫຼັກສູດອື່ນໆ ເຂົ້າກັນ, ປະສານສຳພັນເນື້ອໃນວິຊາຕ່າງ ໆ ເຂົ້າດ້ວຍກັນ ໂດຍມຸ່ງທີ່ຈະສະໜອງຕາມຄວາມຕ້ອງການ ແລະ ຄວາມສົນໃຈຂອງຜູ້ຮຽນ ແລະ ສົ່ງເສີມໃຫ້ຜູ້ຮຽນມີສ່ວນຮ່ວມໃນກິດຈະກຳການຮຽນຮູ້ແບບ Active Learning; 5. ຫຼັກສູດບູລະນາການ (Integrated Curriculum) ເປັນຫຼັກສູດທີ່ລວບລວມປະສົບການຜູ້ຮຽນເຂົ້າກັນ ເປັນກຸ່ມ ຫຼື ໝວດໝູ່ຕາມແຕ່ລະກຸ່ມວິຊາ ຫຼື ໝວດວິຊາ.

**3). ການປະເມີນຄວາມຕ້ອງການຈຳເປັນເພື່ອພັດທະນາຫຼັກສູດ (Need Assessment for Curriculum and Instruction Development):** ອັນຊະລີ ສາຣະຣັດຕະນະ (ພສ. 2554) ກ່າວວ່າ ການປະເມີນຄວາມຕ້ອງການຈຳເປັນເພື່ອພັດທະນາຫຼັກສູດແມ່ນຂະບວນການທີ່ນັກວາງແຜນຫຼັກສູດໃຊ້ເພື່ອໃຫ້ໄດ້ຂໍ້ມູນຂ່າວສານ, ຫຼັກຖານກ່ຽວກັບຄວາມຈຳເປັນຂອງຫຼັກສູດວ່າ: ຊາດ, ສັງຄົມ ຫຼື ສະຖານສຶກສາ, ຄວນອອກແບບຫຼັກສູດແບບໃດ? ພ້ອມທັງບອກໃຫ້ຮູ້ວ່າຈຳເປັນຕ້ອງຈັດຫຼັກສູດແບບນີ້ ຫຼື ບໍ່? ການອອກແບບຫຼັກສູດແບບນີ້ເປັນສິ່ງທີ່ຕ້ອງການ ຫຼື ບໍ່? ເພື່ອທີ່ຜູ້ທີ່ຈະພັດທະນາຫຼັກສູດຈະໄດ້ນຳຂໍ້ມູນໄປໃນໃນການອອກແບບຫຼັກສູດ (Curriculum Design)ຂັ້ນຕອນການດຳເນີນການວິໄຈເພື່ອປະເມີນຄວາມຕ້ອງການຈຳເປັນເພື່ອພັດທະນາຫຼັກສູດ ສາມາດດຳເນີນການໄດ້ຕາມ 4 ຂັ້ນຕອນ ດັ່ງແຜນວາດທີ 1 ລຸ່ມນີ້:

| ຂັ້ນທີ 1 ການລະບຸຄວາມຕ້ອງການຈຳເປັນ (Identifying needs) | ຂັ້ນທີ 2 ການຈັດລຳດັບຄວາມຕ້ອງການຈຳເປັນ (The need to prioritize) | ຂັ້ນທີ 3 ການການວິເຄາະສາເຫດ (Cause analysis) | ຂັ້ນທີ 4 ການກຳນົດທາງເລືອກ (Defining alternatives) |
|---|---|---|---|
| + ວິທີການ: - ຜົນການວິໄຈ, ຕົວຊີ້ບອກ, ແບບສອບຖາມ, ການສຳພາດ, ສັງເກດ, ສົນທະນາກຸ່ມແບບເຈາະຈົງ, ກຸ່ມສົມມຸດ, ສຽງຈາກພາບ, ປະຊາວິຈານ, ແຜນວາດຊ່ອຍຈື່, ເດວຟາຍ (Delphi) ... | + ວິທີການ: - ປຽບທຽບຄວາມແຕກຕ່າງຄ່າສະເລ່ຍ, ການປະເມີນຄ່າມາດຕາວັດ, ກຳນົດນ້ຳໜັກລາຍຄູ່, ການລຽງລຳດັບດ້ອຍພາບ, ດັດສະນີຕ່າງ ໆ , ການວິເຄາະມາ ຕຣິສ, ຂະບວນການ PHP ... | + ວິທີການ: - ການວິເຄາະສາເຫດຂອງຄວາມລົ້ມເຫຼວ, ການວິເຄາະແຜນວາດຜັງກ້າງປາ, ການວິເຄາະ Lisreal ແລະ ວິທີການຂອງຂັ້ນຕອນທີ 1 | + ວິທີການ: - ວົງລໍ້ອະນາຄົດ, ການວິເຄາະອັດຖະປະໂຫຍດ, ພະຫຸລັກ, ການວິເຄາະຕົ້ນທຶນ ແລະ ຜົນທີ່ຕາມມາ, ອະນາຄົດຕະພາບ, ຂະ ບວນການ PHP ແລະ ວິທີການຂອງຂັ້ນຕອນທີ 1 |

ແຜນວາດທີ 1 ຂັ້ນຕອນການດຳເນີນການວິໄຈເພື່ອປະເມີນຄວາມຕ້ອງການຈຳເປັນ

ການປະເມີນຄວາມຕ້ອງການຈຳເປັນ ມີວັດຖຸປະສົງທີ່ສຳຄັນໃນການດຳເນີນການ 3 ດ້ານ ໄດ້ແກ່: 1. ເພື່ອກຳນົດຄວາມຕ້ອງການທີ່ຈຳເປັນຂອງຜູ້ຮຽນທີ່ບໍ່ໄດ້ຄົ້ນພົບໃນຫຼັກສູດທີ່ກຳລັງໃຊ້ຢູ່. 2. ເຮັດໃຫ້ເກີດການທອນຄືນຫຼັກສູດເພື່ອເພີ່ມເຕີມຄວາມຕ້ອງການຈຳເປັນທີ່ບໍ່ພົບໃນຫຼັກສູດໃຫ້ໄດ້ຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້ ແລະ 3. ເພື່ອການົດ ຫຼື ຄົ້ນຫາສິ່ງທີ່ເຮັດໃຫ້ຜູ້ຮຽນບໍ່ສາມາດຮຽນໄດ້ຕາມຫຼັກສູດ, ຜູ້ຮຽນຕ້ອງການຄວາມຊ່ວຍເຫຼືອຫຍັງແດ່ ເພື່ອໃຫ້ສາມາດຮຽນໄດ້ຕາມຫຼັກສູດ. ການຫາຄວາມຕ້ອງການຈຳເປັນເພື່ອພັດທະນາຫຼັກສູດ ແລະ ການສອນ ຄວນດຳເນີນການແບບຕໍ່ເນື່ອງ ແລະ ຄວນເຮັດທຸກໆ 5 ປີ ຫຼື ຕາມກຳນົດເວລາການໃຊ້ຫຼັກສູດໃນຊຸດຮຽນໜຶ່ງໆ ແລະ ປັບປຸງເລັກນ້ອຍໃນທຸກໆປີ (Oriva, 2001) ໂດຍກຳເນີນການຕາມລຳດັບຄື: ກ່ອນກຳນົດຈຸດໝາຍຂອງຫຼັກສູດ, ຫຼັງກຳນົດຈຸດໝາຍຂອງຫຼັກສູດ, ຫຼັງການປະເມີນການສອນ ແລະ ຫຼັງການປະເມີນຫຼັກສູດ.

**4). ສະມັດຖະນະ:** ສະມັດຖະນະ ພາສາອັງກິດ ຄື Competencies ໝາຍເຖິງກຸ່ມພຶດຕິກຳທີ່ກໍໃຫ້ເກີດຜົນການປະຕິບັດງານທີ່ເໜືອກວ່າຄົນອື່ນ ຫຼືສາມາດສ້າງຜົນງານໄດ້ແຕກຕ່າງຈາກຜູ້ອື່ນ ແລະ ປະສົບຄວາມສຳເລັດ (ອັນຊະລີ ສາຣະຣັດຕະນະ, ພສ. 2559) ເຊິ່ງສະມັດຖະນະມີອົງປະກອບທີ່ສຳຄັນຢູ່ 3 ປະການ ໄດ້ແກ່: ຄ່ານິຍົມ (Value) ໝາຍເຖິງ ການເຫັນຄຸນຄ່າຂອງການກະທຳທີ່ກໍໃຫ້ເກີດຄຸນນະພາບ, ຄວາມສຳ ເລັດ, ການບັນລຸເປົ້າໝາຍວ່າເປັນສິ່ງທີ່ດີ ແລະ ຄວນກະທຳ ແລະ ມີຄວາມຮູ້ສຶກສຶກຄິດ, ຄວາມເຊື່ອວ່າຕົນເອງສາມາດເຮັດສິ່ງນັ້ນໆ ໄດ້ສຳເລັດຢ່າງງ່າຍດາຍ ຈຶ່ງຢາກເຮັດພຶດຕິກຳນັ້ນໆ ສະເໝີໆ. ທັກສະ (Skills) ໝາຍເຖິງຄວາມຊຳນານທີ່ເກີດຈາກການການມີຄວາມຮູ້ ແລະ ຄວາມສາມາດທີ່ພຽງພໍໃນການປະຕິບັດວຽກງານໃດໜຶ່ງ ແລະ ແຮງຈູງໃຈ (Motives) ເປັນຄວາມປາຖະໜາທີ່ຢູ່ເລິກລົງໄປໃຕ້ຈິດສຳນຶກທີ່ຊຸກຍູ້ບຸກຄົນໃຫ້ກະທຳ ຫຼື ບໍ່ກະທຳສິ່ງໃດສິ່ງໜຶ່ງ, ແຮງຈູງໃຈຈຶ່ງເປັນພະລັງພື້ນຖານທີ່ຊີ້ນຳໃຫ້ບຸກຄົນເລືອກແນວທາງຊີວິດ.

**5). ລະບົບ E-Classnet ໃນ ສປປ ລາວ:** ໃນປີ 2019 ທ່ານ ຣສ.ດຣ ສັນຕິ ວິຈັກຂະນາລັນ ແລະ ຄະນະ ໄດ້ພັດທະນາລະບົບ E-Classnet ເປັນສະບັບພາສາລາວ ໃຊ້ສຳລັບ ສປປ ລາວ (https://eclassnet.kku.ac.th/laos/) ພາຍໃຕ້ຊື່ LAO Seclassnet ເຊິ່ງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແຫ່ງຊາດ ຫຼື ສວສ. ໄດ້ນຳມາສຶກສາ ແລະ ນຳໃຊ້ເປັນລະບົບຝຶກອົບຮົມແບບ e-Training ກັບຄູຄະນິດສາດລະດັບມັດທະຍົມສຶກສາທົ່ວປະເທດ.

ລະບົບ E-Classnet ເປັນລະບົບການຈັດການຮຽນການສອນຜ່ານເຄືອຂ່າຍຄອມພິວເຕີ ເຊິ່ງປະກອບດ້ວຍ 3 ລະບົບ ຄື: ລະບົບຜູ້ສອນ, ລະບົບຄູເຄືອຂ່າຍ ແລະ ລະບົບຜູ້ຮຽນ ແລະ ສາມາດນຳໄປໝູນໃຊ້ເຂົ້າໃນການຮຽນການສອນໄດ້ຫຼາກຫຼາຍຮູບແບບ ເຊັ່ນ: ໃຊ້ເປັນລະບົບ E-learning ເຕັມຮູບແບບ, ໃຊ້ເປັນສ່ວນໜຶ່ງຂອງການຈັດການຮຽນການສອນ ຫຼື ໃຊ້ເປັນສື່ເພື່ອຮຽນຮູ້ດ້ວຍຕົນເອງ, ອີກດ້ານໜຶ່ງຍັງສາມາດໃຊ້ເປັນລະບົບ e-Training ໂດຍຜູ້ສົນໃຈຮຽນວິຊາໃດກໍ່ສາມາດສະໝັກລົງທະບຽນຮຽນໃນລາຍວິຊານັ້ນໄດ້ໂລດ. ນອກຈາກນີ້ E-Classnet ຍັງເປັນເຄື່ອງມືຊ່ອຍໃນການພັດທະນາເນື້ອໃນບົດຮຽນໃຫ້ຜູ້ສອນເລືອກໃຊ້, ມີລະບົບການສື່ສານກັບຜູ້ຮຽນທີ່ສະດວກ, ວ່ອງໄວ, ມີລະບົບການຮັກສາຄວາມປອດໄພຂອງຂໍ້ມູນທີ່ໃຫ້ຄວາມໝັ້ນໃຈແກ່ຜູ້ໃຊ້ທັງຜູ້ສອນ ແລະ ຜູ້ຮຽນ. ມີລະບົບຕິດຕາມການຮຽນຂອງຜູ້ຮຽນ ທີ່ສາມາດຊ່ວຍໃຫ້ຜູ້ຮຽນຮັບຮູ້ຜົນການຮຽນຂອງຕົນເປັນແຕ່ລະໄລຍະ, ມີລະບົບປະເມີນ

ຜົນ ເພື່ອເປັນແນວທາງການພັດທະນາ ແລະ ປັບປຸງ ການຮຽນການສອນຂອງຜູ້ສອນ. (ສັນຕິ ວິຈັກຂະນາລັນ, ພສ. 2562; ທອງຂາວ ແສງສຸລິຈັນ, ພສ. 2563)

**6). ການວິໄຈໃນຫ້ອງຮຽນ** ໝາຍເຖິງການວິໄຈທີ່ດຳເນີນການໂດຍຄູຜູ້ສອນເພື່ອແກ້ໄຂບັນຫາທີ່ເກີດຂຶ້ນໃນຫ້ອງຮຽນ ແລະ ນຳຜົນມາປັບປຸງການຮຽນການສອນເພື່ອໃຫ້ເກີດປະໂຫຍດສູງສຸດແກ່ຜູ້ຮຽນ ເປັນການວິໄຈທີ່ດຳເນີນການຢ່າງວ່ອງໄວ, ນຳຜົນໄປໃຊ້ທັນທີ ແລະ ສະທ້ອນຂໍ້ມູນກ່ຽວກັບການປະຕິບັດງານຕ່າງໆ ໃນຊີວິດປະຈຳວັນຂອງຕົນເອງ, ໃຫ້ທັງຕົນເອງ ແລະ ເພື່ອນຮ່ວມງານໃນໂຮງຮຽນໄດ້ມີໂອກາດວິພາກ, ອະພິປາຍ ແລະ ລແກປ່ຽນຄວາມຮູ້ໃນແນວທາງທີ່ໄດ້ປະຕິບັດ ແລະ ຜົນທີ່ເກີດຂຶ້ນເພື່ອພັດທະນາການຮຽນຮູ້ທັງຂອງຄູ ແລະ ຜູ້ຮຽນ (ສຸວິມົນ ວ່ອງວານິດ, ພສ.2555)

**7). ວົງຈອນການວິໄຈໃນຫ້ອງຮຽນ** ໝາຍເຖິງ ຂະບວນການວິໄຈແບບຂີດລວດຕາມແນວຄິດທີ່ນຳສະເໜີໂດຍ (Kemmis, 1998) ເຊິ່ງມີອົງປະກອບ 4 ຂັ້ນຕອນ ຄື: (1) ການວາງແຜນ (Plan) (2) ປະຕິບັດການຕາມແຜນ (Act) (3) ການສັງເກດຜົນທີ່ເກີດຈາກການປະຕິບັດ (Observe) ແລະ (4) ການສະທ້ອນຜົນຫຼັງຈາກປະຕິບັດການ (Reflect) ໂດຍເປີດໂອກາດໃຫ້ຜູ້ອື່ນມີສ່ວນຮ່ວມໃນການວິພາກ-ວິຈານ ເພື່ອນຳໄປສູ່ການປັບປຸງແກ້ໄຂໃນວົງຈອນຕໍ່ໄປ. ສະແດງດັ່ງແຜນວາດທີ 2 ຕໍ່ໄປນີ້:




ແຜນວາດທີ 2 ວົງຈອນການວິໄຈໃນຫ້ອງຮຽນ
(ສຸວິມົນ ວ່ອງວານິດ, ພສ. 2555)

**8). ຂັ້ນຕອນການດຳເນີນການວິໄຈໃນຫ້ອງຮຽນ:** ການວິໄຈໃນຫ້ອງຮຽນສາມາດດຳເນີນການຕາມ 8 ຂັ້ນຕອນດັ່ງນີ້:

**ຂັ້ນຕອນທີ 1:** ກຳນົດບັນຫາ: ຜູ້ສອນລອງທົບທວນຄືນກ່ຽວກັບສະພາບບັນຫາທີ່ເກີດຂຶ້ນໃນຫ້ອງຮຽນໃນຂະນະທີ່ກຳລັງສອນ, ກໍຈະພົບວ່າມີຫຼາກຫຼາຍສະພາບ ແລະ ບັນຫາທີ່ເກີດຂຶ້ນໃນຂະບວນການຈັດການຮຽນການສອນຄັ້ງໜຶ່ງໆ ເຊັ່ນ: ບັນຫາກ່ຽວກັບການຮຽນຮູ້ຂອງຜູ້ຮຽນ, ບັນຫາກ່ຽວກັບທັກສະການປະຕິບັດກິດຈະກຳຂອງຜູ້ຮຽນ, ບັນຫາກ່ຽວກັບຄຸນລັກສະນະທີ່ຈະເຮັດໃຫ້ເກີດກັບນັກຮຽນຫຼັງຮຽນ ... ເມື່ອຄູເຫັນບັນຫາແລ້ວກໍເລືອກບັນຫາເພື່ອນຳມາສູ່ການວິໄຈ ເຊິ່ງການເລືອກບັນຫາມາວິໄຈຄວນຄຳນຶງເຖິງລັກສະນະ ຄື: ຕ້ອງແມ່ນບັນຫາທີ່ຄູພົບພໍ້ແທ້ໃນຂະບວນການຈັດການຮຽນການສອນ, ມີຄວາມຊັດເຈນ ແລະ ແນ່ໃຈວ່າແມ່ນບັນຫາແທ້, ຫຼີກລ່ຽງການຕັດສິນວ່າເປັນບັນຫາໃນຫ້ອງຮຽນໂດຍການຕັດສິນຄວາມຄິດຂອງຜູ້ສອນເອງ ແລະ ບັນຫາຕ້ອງສອດຄ່ອງກັບຄວາມຖະໜັດ, ຄວາມສົນໃຈ ແລະ ສັກກະຍະພາບຂອງຄູຜູ້ສອນ.

**ຂັ້ນຕອນທີ 2:** ການຕັ້ງຈຸດປະສົງ ແລະ ຊື່ເລື່ອງເປັນການກຳນົດວ່າຜູ້ວິໄຈຈະເຮັດຫຍັງ? ເພື່ອຕອບຄຳຖາມການວິໄຈ ແລະ ເປັນພື້ນຖານໃນການຕັ້ງຊື່ເລື່ອງ. ໝາຍຄວາມວ່າການຕັ້ງຊື່ເລື່ອງຕ້ອງອີງຕາມຈຸດປະສົງ ແລະ ເນື້ອໃນທີ່ຈະເຮັດວິໄຈ. ຊື່ເລື່ອງຄວນເປັນລັກສະນະປະໂຫຍກບອກເລົ່າ ແລະ ສະແດງໃຫ້ເຫັນຄວາມສຳພັນຂອງຕົວປ່ຽນ. ການຕັ້ງຊື່ເລື່ອງຄວນຄອບຄຸມ 4 ອົງປະກອບຄື: ຈຸດມຸ່ງໝາຍ, ຕົວປ່ຽນ, ກຸ່ມເປົ້າໝາຍ ແລະ ວິທີການ/ນະວັດຕະກຳທີ່ນຳມາສຶກສາ ຫຼື ແກ້ບັນຫາ.

**ຂັ້ນຕອນທີ 3:** ການພັດທະນານະວັດຕະກຳສຳລັບຫ້ອງຮຽນຄູນັກວິໄຈທີ່ຕ້ອງໃຊ້ ຫຼື ພັດທະນານະວັດຕະກຳ, ໂດຍສະເພາະແມ່ນນະວັດຕະກຳການຮຽນການສອນທີ່ເປັນການປ່ຽນແປງ ຫຼື ພັດທະນາການຮຽນຮູ້ຂອງຜູ້ຮຽນຄວນເປັນວິທີການ ຫຼື ສິ່ງທີ່ຄູຄິດຄົ້ນ ຫຼື ສ້າງຂຶ້ນມາໃໝ່ ຫຼື ບໍ່ເຄີຍມີເຮັດມາກ່ອນ. ອາດຈະເປັນນະວັດຕະກຳດ້ານຫຼັກສູດ, ຂະບວນການການຮຽນການສອນ, ສື່ການສອນ, ນະວັດຕະກຳດ້ານການວັດ ແລະ ປະເມີນຜົນລວມທັງນະວັດຕະກຳດ້ານການບໍລິຫານຈັດການທີ່ກ່ຽວ ຂ້ອງກັບການຮຽນການສອນ.

**ຂັ້ນຕອນທີ 4:** ການເລືອກປະເພດຂອງການວິໄຈການວິໄຈໃນຫ້ອງຮຽນສາມາດໃຊ້ການວິໄຈໄດ້ຢ່າງຫຼາກຫຼາຍປະເພດຕາມເປົ້າໝາຍຂອງການຄົ້ນຄວ້າຫາຄຳຕອບກ່ຽວກັບຕົວປ່ຽນຂອງຜູ້ຮຽນເພື່ອນຳມາໃຊ້ບັນລະຍາຍ, ອະທິບາຍ, ຄາດຄະເນ ຫຼື ຄວບຄຸມ ໂດຍພາຍໃຕ້ຂະບວນການທາງວິທະຍາສາດ

(Sciencetific Method)

**ຂັ້ນຕອນທີ 5:** ການກຳນົດຕົວຢ່າງ: ຄູຜູ້ສອນທີ່ເປັນນັກວິໄຈຕ້ອງກຳນົດຕົວຢ່າງໃນການວິໄຈໃຫ້ ຊັດເຈນໂດຍຍຶດຫຼັກການກຸ່ມຕົວຢ່າງຕ້ອງເປັນຕົວແທນທີ່ດີຂອງປະຊາກອນ ຫຼື ຕ້ອງເປັນຜູ້ທີ່ໃຫ້ຂໍ້ມູນສຳຄັນ ຂອງກຸ່ມເປົ້າໝາຍສຳຄັນຂອງການພັດທະນາ. ການໃຊ້ກຸ່ມເປົ້າໝາຍ ຫຼື ກຸ່ມຕົວຢ່າງຂຶ້ນກັບຈຸດປະສົງຂອງການວິໄຈ ໂດຍໃຫ້ຄວາມສຳຄັນກັບການກຳນົດຂະໜາດຕົວຢ່າງ (sample size) ແລະວິທີການໄດ້ມາ (Sampling) ເປັນສຳຄັນ

**ຂັ້ນຕອນທີ 6:** ການອອກແບບເຄື່ອງມືວິໄຈ. ສຳລັບການວິໄຈເພື່ອພັດທະນາການຮຽນການສອນ ເປັນເຄື່ອງມືທີ່ໃຊ້ໃນການເກັບກຳ, ຮວບຮວມຂໍ້ມູນຈະສອດຄ່ອງກັບລັກສະນະການປະເມີນຕາມສະພາບຈິງ, ຄວນໃຊ້ເຄື່ອງມືທີ່ຫຼາກຫຼາຍ ເຊັ່ນ: ແບບທົດສອບ, ແບສັງເກດພຶດຕິກຳ, ແບບສຳພາດແບບປະເມີນຄຸນນະພາບປະຕິບັດງານ ... ເປັນຕົ້ນ

**ຂັ້ນຕອນທີ 7:** ການເລືອກວິທີການວິເຄາະຂໍ້ມູນ. ສິ່ງສຳຄັນທີ່ຕ້ອງພິຈາລະນາໃນຂັ້ນຕອນນີ້ຄື ຂໍ້ມູນທີ່ເກັບກຳຮວບຮວມມານັ້ນເປັນຂໍ້ມູນດ້ານປະລິມານ ຫຼື ຂໍ້ມູນດ້ານຄຸນນະພາບ (ຄາສາພາດ, ຜົນການສັງເກດ) ເມື່ອແຍກໄດ້ແລ້ວກໍດາເນີນການວິເຄາະ ເພື່ອຕອບຈຸດປະສົງຂອງການວິໄຈ ຫຼື ລາຍງານຜົນແຕ່ລະສ່ວນຂອງການພັດທະນາຜູ້ຮຽນໃຫ້ສອດຄອງກັບລັກສະນະຂອງຂໍ້ມູນ.

**ຂັ້ນຕອນທີ 8:** ການຂຽນລາຍງານວິໄຈ. ການລາຍງານການວິໄຈມີຈຸດມຸ່ງໝາຍເພື່ອນຳສະເໜີອົງຄວາມຮູ້ໃຫ້ເປັນລະບົບ, ຊັດເຈນ ແລະ ເຊື່ອຖືໄດ້. ສາລັບການວິໄຈໃນຫ້ອງຮຽນມີຫຼັກການສຳຄັນຄື ການສະແດງຫຼັກຖານ ຫຼື ຂໍ້ມູນປະກອບ ເພື່ອຊີ້ໃຫ້ເຫັນທີ່ມາຂອງການສະຫຼຸບຜົນການວິໄຈ. (ຈະຕຸພູມ ເຂດຈັດຕຸຈັກ, ພສ. 2562)

**2.1.2 ຂະບວນການພັດທະນາຫຼັກສູດ**

ໃນການຄົ້ນຄວ້າຄັ້ງນີ້ ທາງຄະນະຄົ້ນຄວ້າໄດ້ປັບປຸງ ແລະໝູນໃຊ້ໃຊ້ຂະບວນການພັດທະນາຫຼັກສູດຂອງນັກການສຶກສາຫຼາຍທ່ານ ເຊັ່ນ: ສະງັດ ອຸດທະນັນ (ພສ. 2532) ພູນສຸກ ອຸດົມ (ພສ. 2556) ມີຂັ້ນຕອນ 4 ຂັ້ນຕອນດັ່ງລາຍລະອຽດຕໍ່ໄປນີ້:

**- ຂັ້ນທີ 1 ການສຶກສາຂໍ້ມູນພື້ນຖານ (Foundamental data Analysis):** ຂັ້ນຕອນນີ້ເປັນການສຶກສາຂໍ້ມູນພື້ນຖານ, ສຶກສາສະພາບ ແລະ ຄວາມຕ້ອງການຈຳເປັນໃນການພັດທະນາຫຼັກສູດ; ໂດຍດຳເນີນການສຶກສາຂໍ້ມູນພື້ນຖານດ້ານຕ່າງ ໆ ດັ່ງນີ້: 1). ສຶກສາວິໄສທັດ ແລະ ແຜນຍຸດທະສາດການພັດທະນາຂະແໜງ ການສຶກສາຂອງກະຊວງສຶກສາທິການ ແລະ ກິລາ 10 ປີ ແຕ່ປີ 2016-2025. ວິເຄາະນະໂຍບາຍແຜນພັດທະນາການສຶກສາແຫ່ງຊາດ 5 ປີ ຄັ້ງທີ IX ແຕ່ປີ 2021 - 2025 ຂອງ ສປປ ລາວ. ວິໄສທັດ ແລະ ແຜນຍຸດທະສາດການພັດທະນາການສຶກສາຂອງ ມະຫາວິທະຍາໄລສຸພານຸວົງ 10 ປີ ແຕ່ປີ 2016 - 2025. 2). ສຶກສາທິດສະດີ ແລະ ເອກະສານ, ງານວິໄຈທີ່ກ່ຽວຂ້ອງກັບການພັດທະນາຫຼັກສູດ, ການວິໄຈໃນຫ້ອງຮຽນ ແລະ ການບູລະນາການດ້ານ ໄອຊີທີ ເຂົ້າໃນການຈັດການຮຽນການສອນ, ລະບົບ E-classnetເຊິ່ງເປັນການດຳເນີນການວິເຄາະທາງດ້ານເນື້ອໃນເອກະສານ (Contents Analysis) ແລະ 3). ສຶກສາສະພາບການ ແລະ ຄວາມຕ້ອງການຈຳເປັນໃນການພັດທະນາຫຼັກສູດການວິໄຈໃນຫ້ອງຮຽນ. ສຶກສາໂດຍໃຊ້ແບບສອບຖາມສະພາບຄວາມເປັນປັດຈຸບັນ ແລະ ສະພາບທີ່ຄວນຈະເປັນຂອງການວິໄຈໃນຫ້ອງຮຽນ

**- ຂັ້ນທີ 2 ການອອກແບບ ແລະ ພັດທະນາຫຼັກສູດ (Design and curriculum development):** ຂັ້ນນີ້ເປັນການອອກແບບຫຼັກສູດ ໂດຍອີງຕາມຜົນທີ່ໄດ້ຮັບຈາກການວິເຄາະ ແລະ ສັງເຄາະໃນຂັ້ນຕອນທີ 1 ເພື່ອນາມາອອກແແບບຫຼັກສູດທີ່ເປັນຫຼັກສູດສະບັບຮ່າງ. ຫຼັງຈາກນັ້ນກໍດຳເນີນການພັດທະນາຫຼັກສູດດ້ວຍການກວດສອບຄຸນນະພາບຂອງຫຼັກສູດ ແລະ ເອກະສານຫຼັກສູດ ດ້ວຍການປະເມີນໂດຍຜູ້ຊ່ຽວຊານຈຳນວນ 5 ທ່ານ ເພື່ອກວດສອບຄວາມສອດຄ່ອງ ແລະ ຄວາມເໝາະສົມຂອງຫຼັກສູດ ແລະ ເອກະສານປະກອບຫຼັກສູດ ແລະ ການປະຊຸມສົນທະນາກຸ່ມ (Discussion Group)

**- ຂັ້ນທີ 3 ການທົດລອງໃຊ້ ແລະ ປະເມີນປະສິດທິຜົນຫຼັກສູດ (Implementation Curriculum).** ຂັ້ນຕອນນີ້ເປັນການດຳເນີນງານເພື່ອປະເມີນຜົນການໃຊ້ຫຼັກສູດດ້ວຍການຫາປະສິດທິຜົນຂອງຫຼັກສູດ ໃນດ້ານ: ຄວາມຮູ້ຄວາມເຂົ້າໃຈກ່ຽວກັບການວິໄຈໃນຫ້ອງຮຽນ, ທັກສະໃນການອອກແບບເຄົ້າໂຄງການວິໄຈ (Research Proprosal) ແລະ ຄວາມເພິ່ງພໍໃຈຕໍ່ຫຼັກສູດທີ່ພັດທະນາຂຶ້ນ.

**- ຂັ້ນທີ 4 ການປະເມີນ ແລະ ປັບປຸງຫຼັກສູດ (Evaluation and Improvement Curriculum).** ຂັ້ນຕອນນີ້ເປັນການປະເມີນຜົນ ແລະ ຕິດຕາມຜົນການນຳໄປໃຊ້ໃນການຈັດການຮຽນການສອນໃນຫ້ອງຮຽນຕົວຈິງ ເພື່ອບັນທຶກຜົນ ແລະ ຂໍ້ມູນຍ້ອນກັບທັງດ້ານດີ ແລະ ດ້ານອ່ອນເພື່ອນຳມາປັບປຸງຫຼັກສູດໃນຂັ້ນຕໍ່ໄປ ດັ່ງແຜນວາດ ລຸ່ມນີ້:

| ຂັ້ນທີ 1 ສຶກສາຂໍ້ມູນພື້ນຖານ **(Fundamental data analysis)** | ຂັ້ນທີ 2 ການອອກແບບ ແລະ ພັດທະນາຫຼັກສູດ **(Design and curriculum development)** | ຂັ້ນທີ 3 ການທົດລອງໃຊ້ **(Implementation)** | ຂັ້ນທີ 4 ການປະເມີນຜົນ ແລະ ການປັບປຸງຫຼັກສູດ. **(Evaluation and Improvement)** |
|---|---|---|---|
| 1. ສຶກສາວິໄສທັດ, ແຜນນະໂຍບາຍ ແລະ ພັດທະນາການສຶກສາ<br>2. ສຶກສາທິດສະດີ ແລະ ງານວິໄຈທີ່ກ່ຽວຂ້ອງ<br>3. ສຶກສາສະພາບການ ແລະ ຄວາມຕ້ອງການຈຳເປັນໃນການພັດທະນາຫຼັກສູດ<br>4. ສະຫຼຸບຂໍ້ມູນພື້ນຖານ | 1. ອອກແບບຫຼັກສູດ<br>2. ກວດສອບຄຸນະພາບຫຼັກສູດດ້ວຍການປະເມີນໂຄງຮ່າງຫຼັກສູດຈາກຜູ້ຊ່ຽວຊານ 5 ທ່ານ ດ້ວຍຄ່າ IOC ແລະ PNI<br>3. ປັບປຸງໂຄງຮ່າງຫຼັກສູດ | 1. ກະກຽມຫຼັກສູດ ແລະ ລະບົບ E-classnet<br>2. ທົດລອງໃຊ້ຫຼັກສູດ; ປະເມີນປະສິດທິຜົນຫຼັກສູດດ້ວຍວັດຄວາມຮູ້ຄວາມເຂົ້າໃຈ, ທັກສະການອອກແບບເຄົ້າໂຄງ ແລະ ຄວາມເພິ່ງພໍໃຈ | 1. ປະເມີນຜົນການນຳໄປໃຊ້ໃນການສອນຕົວຈິງ ດ້ານ:<br>- ຜົນການຮຽນດ້ານຄວາມຮູ້ຄວາມເຂົ້າໃຈ<br>- ພຶດຕິກຳດ້ານການນຳໃຊ້ລະບົບ E-classnet<br>- ຄວາມເພິ່ງພໍໃຈໃນການໃຊ້ລະບົບ E-classnet<br>- ຄວາມສາມາດໃນການເຮັດການວິໄຈໃນຫ້ອງຮຽນ<br>2. ປັບປຸງເປັນຫຼັກສູດເປັນສະບັບສົມບູນ |

ບົກພ່ອງ-ປັບປຸງ ບົກພ່ອງ-ປັບປຸງ

ແຜນວາດທີ 4 ຂອບຄວາມຄິດໃນການພັດທະນາຫຼັກສູດ (Conceptual Framework)

**ໝາຍເຫດ:** ການນຳສະເໜີໃນບົດຄວາມສະບັບນີ້ຈະໃຊ້ຂໍ້ມູນພຽງແຕ່ໃນຂັ້ນທີ 1 ແລະ ຂັ້ນທີ 2 ເທົ່ານັ້ນ

### 2.2 ອຸປະກອນ

ອຸປະກອນ ຫຼື ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ໄດ້ແກ່: ແບບສອບຖາມສະພາບການ ແລະ ຄວາມຕ້ອງການຈຳເປັນ, ແບບບັນທຶກຄວາມຄິດເຫັນ, ແບບປະເມີນຄວາມສອດຄ່ອງ ແລະ ປະເມີນຄວາມເໝາະສົມ ເຊິ່ງເປັນເຄື່ອງມືທີ່ໃຊ້ແບບວັດປະມານຄ່າ 5 ລະດັບ ຄື 5 ລະດັບຫຼາຍທີ່ສຸດ, 4 ລະດັບຫຼາຍ , 3 ລະດັບປານກາງ, 2 ລະດັບໜ້ອຍ ແລະ 1 ລະດັບໜ້ອຍທີ່ສຸດ. ໂດຍວິທີການວິເຄາະຂໍ້ມູນ ດັ່ງນີ້:

1). ວິເຄາະແບບສອບຖາມສະພາບ ແລະ ຄວາມຕ້ອງການຈຳເປັນໃນການພັດທະນາການວິໄຈໃນຫ້ອງຮຽນ ໂດຍໃຊ້ການວິເຄາະເນື້ອໃນ (Content Analysis), ຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຖານ (Standard Deviation) ແລະ ຄ່າ PNI (Priority Needs Index) ເຊິ່ງກຳນົດຄ່າ PNI >= 0.20 ມີສູດດັ່ງນີ້:

$$PNI = \frac{I - D}{D}$$

ເຊິ່ງ PNI () ໝາຍເຖິງຄ່າດັດຊະນີຄວາມສຳຄັນຂອງລຳດັບຄວາມຕ້ອງການຈຳເປັນ, I ໝາຍເຖິງຄ່າສະເລ່ຍຂອງສະພາບທີ່ຄວນຈະເປັນ ແລະ D ໝາຍເຖິງ ຄ່າສະເລ່ຍຂຶງສະພາບທີ່ປະຕິບັດຢູ່ (ສຸວິມົນ ວ່ອງວານິດ, ພສ. 2555)

2). ວິເຄາະຄວາມສອດຄ່ອງ ແລະ ຄວາມເໝາະສົມຂອງຫຼັກສູດດ້ວຍຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຖານ (Standard Deviation)

### 2.3 ກຸ່ມຕົວຢ່າງ ແລະ ແບບແຜນການວິໄຈ

ກຸ່ມຕົວຢ່າງແມ່ນອາຈານສອນ ແລະ ນັກສຶກສາຊັ້ນປີທີ 4 ສັງກັດຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ໃນພາກຮຽນທີ 1 ສົກສຶກສາ 2019-2020 ລວມທັງໝົດຈຳນວນ 56 ຄົນ. ໂດຍໃຊ້ຂະບວນວິໄຈແບບປະສົມປະສານ (Mixed method) ດ້ວຍວິທີການທາງດ້ານຄຸນນະພາບ ແລະ ປະລິມານ.

ນຳໃຊ້ແບບແຜນການຄົ້ນຄວ້າແບບ (Research Design) ມີການຮອງຮັບພາຍໃນ (Embedded Design) ວິທີດ້ານຄຸນນະພາບເປັນຫຼັກ (Creswell, Plano Clark, 2011)

### 3. ຜົນໄດ້ຮັບ

ຈາກການຄົ້ນຄວ້າ ສາມາດສະເໜີຜົນໄດ້ຮັບ ດັ່ງນີ້:

1). ຜົນການສຶກສາສະພາບຄວາມເປັນປັດຈຸບັນໃນການຈັດການຮຽນການສອນການວິໄຈໃນຊັ້ນຮຽນ ພົບວ່າສະພາບຄວາມເປັນປັດຈຸບັນໃນການຈັດການຮຽນການສອນການວິໄຈໃນຊັ້ນຮຽນຢູ່ໃນລະດັບປານກາງ ມີຄ່າສະເລ່ຍ 3.33 ແລະ ຄວາມຕ້ອງການຈຳເປັນໃນການຈັດການຮຽນການສອນການວິໄຈໃນຊັ້ນຮຽນຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 4.00 ເມື່ອຄຳນວນຫາຄ່າດັດຊະນີຄວາມສຳຄັນຂອງລຳດັບຄວາມຕ້ອງການຈຳເປັນໄດ້ຄ່າ PNI = 0.201

2). ຜົນການອອກແບບ ແລະ ພັດທະນາດ້ານຄຸນນະພາບຂອງຫຼັກສູດເສີມສ້າງສະມັດຖະນະດ້ານການວິໄຈໃນຫ້ອງຮຽນ ດັ່ງນີ້:

- ການອອກແບບໂຄງສ້າງຫຼັກສູດ: ຫຼັກສູດເສີມສ້າງສະມັດຖະນະດ້ານການວິໄຈໃນຫ້ອງຮຽນຜ່ານລະບົບ E-Classnet ສໍາຫຼັບນັກສຶກສາສຶກສາສາດ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ປະກອບດ້ວຍ 7 ໝວດ ແລະ 10 ແຜນການຈັດການຮຽນຮູ້ ເຊິ່ງໄດ້ບັນຈຸແຜນດັ່ງກ່າວລົງໃນລະບົບ E-Classnet (ສະແດງຂໍ້ມູນລະອຽດໃນ ພາກຜະໜວກ)

- ການພັດທະນາຄຸນນະພາບຫຼັກສູດ ໂດຍການປະເມີນຄວາມສອດຄ່ອງຂອງຫຼັກສູດເຊິ່ງມີລະດັບຄວາມສອດຄ່ອງຫຼາຍ ມີຄ່າສະເລ່ຍເທົ່າກັບ 0.82 ເມື່ອພິຈາລະນາເປັນລາຍດ້ານພົບວ່າ ມີຄ່າລະຫວ່າງ 0.40-1.00 ແລະ ມີຄວາມເໝາະສົມໃນລະດັບຫຼາຍເຊັ່ນກັນ ຄື: ມີຄ່າສະເລ່ຍເທົ່າກັບ 4.39 ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.40 ແລະ ເມື່ອພິຈາລະນາແຕ່ລະດ້ານພົບວ່າ ດ້ານທີ່ມີຄວາມເໝາະສົມຫຼາຍທີ່ສຸດແມ່ນດ້ານການກໍານົດແຜນການສອນໃນແຕ່ລະບົດ, ຮອງລົງມາແມ່ນຂໍ້ມູນທົ່ວໄປຂອງລາຍວິຊາ, ດ້ານຄໍາອະທິບາຍລາຍວິຊາ, ດ້ານການກໍານົດການພັດທະນາການຮຽນຮູ້ຂອງນັກສຶກສາ, ການລຽງລໍາດັບຫົວຂໍ້ບົດຮຽນເປັນໄປຕາມການຮຽນຮູ້ຂອງຜູ້ຮຽນ ແລະ ການກໍານົດການປະເມີນຜົນການຮຽນ ຕາມລໍາດັບ.

## 4. ວິພາກຜົນ

ຫຼັກສູດເສີມສ້າງສະມັດຖະນະດ້ານການວິໄຈໃນຫ້ອງຮຽນຜ່ານລະບົບ E-Classnet ສໍາຫຼັບນັກສຶກສາສຶກສາສາດ ຄະນະສຶກສາສາດມະຫາວິທະຍາໄລສຸພານຸວົງ ເປັນຫຼັກສູດເພີ່ມເຕີມທີ່ສ້າງຂຶ້ນບົນພື້ນຖານຄວາມສອດຄ່ອງຂອງທິດສະດີການພັດທະນາຫຼັກສູດໂດຍເລີ່ມຈາກການສຶກສາຂໍ້ມູນພື້ນຖານດ້ານສະພາບປັດຈຸບັນ ແລະ ຄວາມຕ້ອງການຈໍາເປັນໃນການພັດທະນາຫຼັກສູດ ເຊິ່ງໄດ້ຂໍ້ມູນທີ່ແທ້ຈິງໃນສະພາບການຈິງ ເພື່ອນໍາມາອອກແບບຫຼັກສູດໄດ້ຢ່າງສອດຄ່ອງ ແລະ ເໝາະສົມກັບສະພາບການຈັດການຮຽນການສອນໃນປັດຈຸບັນໂດຍສະເພາະໃນຊ່ວງການແຜ່ລະບາດຂອງພະຍາດໂຄວິດ-19 (COVID-19) ແລະ ຜ່ານການກວດສອບຄຸນນະພາບຂອງຫຼັກສູດຈາກຜູ້ຊ່ຽວຊານຈໍານວນ 5 ທ່ານ ເຊິ່ງມີຄວາມສອດຄ່ອງ ແລະ ເໝາະສົມທີ່ຈະນໍາໄປໃຊ້ຈິງ. ອີກດ້ານໜຶ່ງເປັນການຕອບສະໜອງການຈັດການຮຽນຮູ້ໃນຍຸກສະຕະວັດທີ 21 ຢ່າງແທ້ຈິງ ແລະ ສອດຄ່ອງກັບ ອັນຊະລີ ສາລະຣັດຕະນະ (ພສ. 2554) ທີ່ກ່າວວ່າ: ຈຸດເລີ່ມຕົ້ນໃນການພັດທະນາຫຼັກສູດນັ້ນຄືການສຶກສາສະພາບຄວາມເປັນປັດຈຸບັນ ແລະ ຄວາມຕ້ອງການຈໍາເປັນ (Needs Assessment) ເປັນປັດໄຈສໍາຄັນຫຼັກທີ່ນັກພັດທະນາຫຼັກສູດຕ້ອງເອົາໃຈໃສ່ ເພາະວ່າການຫາຄວາມຕ້ອງການຈໍາເປັນ ເປັນຂະບວນການກໍານົດຜົນສຸດທ້າຍຂອງຄວາມຕ້ອງການເພື່ອໃຫ້ຮູ້ວ່າຕ້ອງການອັນໃດ? ແລ້ວນໍາໄປພັດທະນາຫຼັກສູດຢ່າງເປັນລໍາດັບຂັ້ນສູ່ສິ່ງທີ່ຕ້ອງການ, ເປັນຂະບວນການທີ່ຕ້ອງໃຊ້ປັນຍາ ເພື່ອບອກໃຫ້ຮູ້ວ່າສະຖານສຶກສາ, ຊາດ, ສັງຄົມຄວນເປັນແນວ ໃດ. ການປະເມີນຄວາມຕ້ອງການຈໍາເປັນບໍ່ແມ່ນນະວັດຕະກໍາຫຼັກສູດ ແຕ່ເປັນວິທີການກໍານົດນະວັດຕະກໍານັ້ນມີຄວາມຈໍາ ເປັນ ຫຼື ເປັນທີ່ຕ້ອງການແທ້ ຫຼືບໍ່?. ນອກຈາກນີ້ ຫຼັກສູດດັ່ງກ່າວເປັນການບູລະນາການລະຫວ່າງການຈັດການຮຽນການສອນໃນຫ້ອງຮຽນກັບການໃຊ້ລະບົບ ໄອຊີທີ (ICT: Information Communication Technology) ເຂົ້າກັນໄດ້ຢ່າງເໝາະສົມ ແລະ ຖືໄດ້ວ່າເປັນການຈັດການຮຽນການສອນຍຸກໃໝ່ເຊິ່ງເປັນວິຖີໃໝ່ຂອງການຈັດການຮຽນການສອນ ຫຼື ຍຸກ New Normal ສອດຄ່ອງກັບຜົນງານການວິໄຈຂອງ ລັດດາວັນ ກຸດິລັດ (ພສ.2553) ທີ່ກ່າວວ່າ ການນໍາໃຊ້ບົດຮຽນ e-Learning ບູລະນາການສອນໃນປັດຈຸບັນມີຄວາມເໝາະສົມຫຼາຍ ເຊິ່ງເປັນການສົ່ງເສີມໃຫ້ຜູ້ຮຽນສາມາດຮຽນຮູ້ດ້ວຍຕົນເອງ ເຊິ່ງເປັນອີກທາງເລືອກໜຶ່ງຂອງຮູບແບບການຮຽນການສອນແບບໃໝ່.

## 5. ສະຫຼຸບ

ຈາກຜົນການຄົ້ນຄວ້າ ສາມາດສະຫຼຸບຜົນ ໄດ້ ດັ່ງນີ້:

1). ສະພາບຄວາມເປັນປັດຈຸບັນໃນການຈັດການຮຽນການສອນການວິໄຈໃນຊັ້ນຮຽນຢູ່ໃນລະດັບປານກາງ ແລະ ມີຄວາມຕ້ອງການຈໍາເປັນໃນການຈັດການຮຽນການສອນການວິໄຈໃນຊັ້ນຮຽນຢູ່ໃນລະດັບຫຼາຍ ເຊິ່ງໝາຍເຖິງມີຄວາມຕ້ອງການຈໍາເປັນໃນການພັດທະນາຫຼັກສູດເສີມສ້າງສະມັດຖະນະດ້ານການວິໄຈໃນຫ້ອງຮຽນຜ່ານລະບົບ E-Classnet ສໍາຫຼັບນັກສຶກສາສຶກສາສາດ ຄະນະສຶກສາສາດມະຫາວິທະຍາໄລສຸພານຸວົງ

2). ຫຼັກສູດເສີມສ້າງສະມັດຖະນະດ້ານການວິໄຈໃນຫ້ອງຮຽນຜ່ານລະບົບ E-Classnet ທີ່ອອກແແບບ ປະກອບດ້ວຍ 7 ໝວດ ແລະ 10 ແຜນການສອນ ໂດຍຮຽນຜ່ານລະບົບ E-Classnet ເຊິ່ງຫຼັກສູດດັ່ງກ່າວມີຄວາມສອດຄ່ອງ ແລະ ເໝາະສົມໃນການນໍາໄປໃຊ້ຈິງຕໍ່ໄປ (ສະແດງຂໍ້ມູນລະອຽດໃນ ພາກຜະໜວກ).

## 6. ຂໍ້ຂັດແຍ່ງ

ພວກຂ້າພະເຈົ້າ ທີມງານນັກຄົ້ນຄວ້າ ຂໍປະຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຜົນປະໂຫຍດແອບແຝງໃດ ໆ ກັບອົງກອນຜູ້ສະໜອງທຶນ.

## 7. ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ. (2015). ວິໄສທັດຮອດປີ 2030 ຍຸດທະສາດ ຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີຄັ້ງທີ VIII (2016 - 2020).

ຂວັນດາວ ແຈ່ມແຈ້ງ. (ພສ. 2556). ກົນລະຍຸດການພັດທະນາສະມັດຖະນະດ້ານການວິໄຈດ້ານການວິໄຈຂອງອາຈານມະຫາວິທະຍາໄລຣາຊາພັດກຸ່ມພາກເໜືອຕອນລຸ່ມ. ວາລະສານສຶກສາສາດມະຫາວິທະຍາໄລນະເລສວນ. 15(2): 86-96.

ຄະນະສຶກສາສາດ. (2015). ວິໄສທັດ ແລະ ແຜນຍຸດທະສາດການພັດທະນາຄະນະສຶກສາສາດ 10 ປີ (2016 - 2020). ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ

ຈະຕຸພູມ ເຂດຈະຕຸຈັກ. (ພສ. 2562). ການວິໄຈຊັ້ນຮຽນ (Research in Classroom): ຂະບວນການສ້າງຄວາມຮູ້ ເພື່ອໃຊ້ພັດທະນາການຮຽນການສອນ. ຂອນແກ່ນ: ຄະນະສຶກສາສາດ ມະຫາວິທະຍາໄລຂອນແກ່ນ.

ໃຈທິບ ເຊື້ອລັດຕະນະພົງ. (ພສ. 2539). ການພັດທະນາຫຼັກສູດ: ຫຼັກການ ແລະ ແນວທາງປະຕິບັດ. ກຸງເທບ: ໂຮງພິມອໍຣິນເພຣດສ໌.

ສະງັດ ອຸດທະນັນ. (ພສ. 2532). ພື້ນຖານ ແລະ ຫຼັກການພັດທະນາຫຼັກສູດ (ພິມຄັ້ງທີ 3). ກຸງເທບ: ໂຮງພິມແຫ່ງຈຸລາລົງກອນ ມະຫາວິທະຍາໄລ.

ສາມມິຕິ ສຸກບັນຈົງ. (ພສ. 2554). ພັດທະນາບົດຮຽນ E-Learning ລາຍວິຊາການສະແດງສື່. ງານວິໄຈພາຍໃຕ້ທຶນອຸດໜູນຕາມໂຄງການວິໄຈປີງົບປະມານ ພສ. 2552. ສາຂາວິຊາພາບພະຍົນ ແລະ ສື່ດິຈິຕອນ, ວິທະຍາໄລນະວັດຕະກຳສື່ສານສັງຄົມ. ມະຫາວິທະຍາໄລສີນະຄະລິນທະຣະວິໂຣດ.

ສຸວິມົນ ວ່ອງວານິດ. (ພສ. 2555). ການວິໄຈໃນຊັ້ນຮຽນ (ພິມຄັ້ງທີ່ 16). ກຸງເທບ: ໂຮງພິມຈຸລາລົງກອນມະຫາວິທະຍາໄລ.

ສັນຕິ ວິຈັກຂະນາລັນ. (ພສ. 2562). ເອກະສານປະກອບການສອນລາຍວິຊາ Information Technology Integration in Teaching and Learning. ສາຂາຫຼັກສູດ ແລະ ການສອນ ມະຫາວິທະຍາໄລຂອນແກ່ນ.

ເຊົາວະລິດ ເຕມີຍະກຸນ. (ພສ. 2552). ຮູບແບບການພັດທະນາສະມັດຖະນະທາງການວິໄຈຂອງຄູສັງກັດສຳນັກງານຄະນະກຳມະການອະຊີວະສຶກສາ. ວິທະຍານິພົນດຸດສະດີບັນດິດ. ກຸງເທບ: ມະຫາ ວິທະຍາໄລເທັກໂນໂລຍີພະຈອມເກົ້າ ພຣະນະຄອນເໜືອ.

ທອງຂາວ ແສງສຸລິຈັນ. (ພສ. 2563). ການພັດທະນາຄູຄະນິດສາດລະດັບມັດທະຍົມສຶກສາໃນສາທາລະນະລັດປະຊາທິ ປະໄຕ ປະຊາຊົນລາວ ໂດຍໃຊ້ລະບົບ e-Training. ວິທະຍານິພົນ ປະລິນຍາດຸດສະດີບັນດິດ ສາຂາວິຊາຫຼັກສູດ ແລະ ການສອນ, ມະຫາວິທະຍາໄລຂອນແກ່ນ.

ເບນຈະວັນ ຖະໜອມໄຊທະວັດ, ຜ່ອງສີ ວານິດສຸພາວົງ, ວຸດທິໄຊ ນຽມເທດ ແລະ ໜັດຖະວິດ ພົດຈະນະຕັນຕິ. (ພສ. 2559). ທັກສະແຫ່ງສະຕະວັດທີ 21 : ຄວາມທ້າທາຍໃນການພັດທະນານັກສຶກສາ (21st Century skills: A Challenge for Student Development). ວາລະສານເຄືອຂ່າຍວິທະຍາໄລພະຍາບານ ແລະ ສາທາລະນະສຸກພາກໃຕ້. 3(2): 208-222.

ລັດດາວັນ ກຸດີລັດ. (ພສ.2553). ການພັດທະນາບົດຮຽນ e-Learning ວິຊາເທັກໂນໂລຍີຂໍ້ມູນຂ່າວສານ. ກໍລະນີສຶກສາ: ວິທະຍາໄລກະເສດ ແລະ ເທັກໂນໂລຍີ ເພັດສະບູນ. ວິທະຍານິພົນຄົ້ນຄວ້າອິດສະຫຼະຫຼັກສູດວິທະຍາສາດມະຫາບັນດິດ ສາຂາວິຊາເທັກໂນໂລຍີຄອມພິວເຕີ ແລະ ການສື່ສານ. ມະຫາວິທະຍາໄລທຸລະກິດບັນດິດ.

ວິຈານພານິດ. (ພສ. 2556). ສຸນຸກກັບການຮຽນໃນສະຕະວັດທີ 21. ກຸງເທບ: ມູນນິທິ ສິດສີ - ສະລິດວົງ.

ວິໄຊ ວົງໃຫຍ່. (ພສ. 2537). ຂະບວນການພັດທະນາຫຼັກສູດ ແລະ ການຮຽນການສອນພາກປະຕິບັດ. ກຸງເທບ: ສຸວິຣິຍະສານ.

ອັນຊະລີ ສາລະຣັດຕະນະ. (ພສ. 2554). ການ ປະເມີນຄວາມຕ້ອງການຈຳເປັນ ເພື່ອພັດທະນາຫຼັກສູດ ແລະ ການສອນ.ວາລະສານສຶກສາສາດມະຫາວິທະຍາໄລ ຂອນແກ່ນ. 34(1), 9-20.

______. (ພສ. 2559). ການສຶກສາເຊີງວິເຄາະກ່ຽວກັບສະມັດຖະນະສາກົນ. ວາລະສານສຶກສາສາດມະຫາວິທະຍາໄລ ຂອນແກ່ນ. 39 (3), 1-13.

Colin J. Marsh and George Willis. (2007). Curriculum alternative approaches, Ongoing Issues (Fourth Edition). University of Rhode Island: Pearson Merrill Prentice Hall.

Creswell, John W. (2011). Mixed methods designs. London: Sage Publications Ltd. Harcourt, Brace & World.

Field, J. (2007). "Classroom research," ELT Journal. 5(1) : 192-193.

Grant Wiggins and Jay McTighe. (1998). Understanding by design (Expanded 2nd Edition). Association for Supervision and Curriculum. Virginia: Alexandra USA.

McCleland, D. (2008). "Testing for competence rather than for intelligence,". American Psychologist. 28(1): 1-14; ຈາກ http://www.epnet.com/bin/epwsatch. (August 4, 2020).

Oriva. Peter F. (2001). Developing the curriculum. 5thed. New York: Longman.

VATHANAVONG et al. (2021). Souphanouvong Journal of Multidisciplinary Research and Development
ISSN 2521-0653. Volume 7. Issue 1. Jan – Jun 2021. Page 79-92.

Taba, Hilda. (1962). Development curriculum: Theory and Practice. New York: Harcourt Brace Jovanovich

## ພາກຜະໜວກ ຫຼັກສູດເສີມສ້າງສະມັດຖະນະດ້ານການວິໄຈໃນຫ້ອງຮຽນຜ່ານລະບົບ E-Classnet ສຳຫຼັບນັກສຶກສາສຶກສາສາດ ຄະນະສຶກສາສາດມະຫາວິທະຍາໄລສຸພານຸວົງ

**1). ຂັ້ນຕອນການອອກແບບການຮຽນການສອນຜ່ານລະບົບ E-Classnet**

ການອອກແບບການຮຽນການສອນຜ່ານລະບົບ E-Classnet ມີຂັ້ນຕອນດຳເນີນການ ດັ່ງນີ້

1.1 ຜູ້ສອນຕ້ອງສະໝັກລົງທະບຽນໃນຖານະອາຈານສອນໃນລະບົບ E-Classnet ໂດຍສາມາດເຂົ້າລະບົບຕາມລິ້ງ https://eclassnet.kku.ac.th./laos/ ຈາກນັ້ນເລືອກ Register ດັ່ງນີ້:

1). Register

2). ປ້ອນຂໍ້ມູນທີ່ຈຳເປັນໃຫ້ຄົບຖ້ວນດັ່ງຮູບຂ້າງລຸ່ມນີ້

3). ລົງທະບຽນ



1.2 ເມື່ອສະໝັກລົງທະບຽນຮຽບຮ້ອຍແລ້ວ ລະບົບຈະສົ່ງລະຫັດຜ່ານ (Password) ແລະ ຊື່ຜູ້ໃຊ້ (User name) ໃຫ້ທາງອີເມວທີ່ທ່ານໄດ້ລົງທະບຽນໄວ້ ແລ້ວສາມາດນຳລະຫັດດັ່ງກ່າວມາ Log in ເຂົ້າສູ່ລະບົບໄດ້ດັ່ງນີ້:

1.3 ຜູ້ສອນສາມາດແກ້ໄຂສ່ວນຕ່າງ ໆ ຂອງລະບົບໄດ້ດັ່ງພາບ




ເມື່ອເຂົ້າສູ່ລະບົບມາທຳອິດ ຜູ້ສອນມີຄວາມຈຳເປັນຕ້ອງສຶກສາຂໍ້ມູນໃນຄູ່ມືໃຫ້ລະອຽດສາກ່ອນ ເພື່ອໃຫ້ມີຄວາມຊຳນານໃນການໃຊ້ລະບົບຈາກຄຳສັ່ງ Teacher Manual ເຊິ່ງໃນລະບົບກຽມໄວ້ທັງສອງພາສາ ຄື: ພາສາໄທ ແລະ ພາສາລາວ ດັ່ງຮູບລຸ່ມນີ້




1.3.1 ຜູ້ສອນສາມາດແກ້ໄຂລະຫັດວິຊາ, ລາຍວິຊາ, ຊື່ວິຊາ, ປີການສຶກສາ, ພາກການສຶກສາ ດັ່ງນີ້

1.3.2 ຜູ້ສອນສາມາດເພີ່ມ - ແກ້ໄຂ, ສັງເຂບລາຍວິຊາ, ລິ້ງສາລະໜ້າຮູ້ ແລະ ຂ່າວສານປະຈາວັນ ດັ່ງນີ້

1.3.3 ຜູ້ສອນສາມາດແກ້ໄຂ - ເພີ່ມ ຕາຕະລາງຮຽນ ດັ່ງນີ້

1.3.4 ຜູ້ສອນສາມາດແກ້ໄຂ - ເພີ່ມລາຍຊື່ຜູ້ຮຽນ ດັ່ງນີ້

1.3.5 ຜູ້ສອນສາມາດແກ້ໄຂ - ແກ້ໄຂລາຍຊື່ອາຈານເຄືອຂ່າຍ ແລະ ຜູ້ສອນຮ່ວມ ດັ່ງນີ້




1.3.6 ຜູ້ສອນສາມາດກວດສອບເວລາເຂົ້າຮຽນຂອງຜູ້ຮຽນ ດັ່ງນີ້

1.3.7 ຜູ້ສອນສາມາດກວດວຽກບ້ານ, ກິດຈະກຳ, ໂຄງງານ, Portfolio ແລະ ໃຫ້ຄະແນນໄດ້ ດັ່ງນີ້

1.3.8 ຜູ້ສອນສາມາດຈັດເກຣດຂອງຜູ້ຮຽນໄດ້ ໂດຍກຳນົດຄະແນນ, ເລືອກກິດຈະກຳທີ່ນຳມາຄິດໄລ່ເກຣດ, ກຳນົດຊ່ວງຫວ່າງແບ່ງເກຣດ, ແກ້ໄຂເກຣດ ແລະ ປະກາດເກຣດ

**2). ລະບົບການພັດທະນາ Courseware**

ລະບົບການພັດທະນາ Courseware ເປັນລະບົບທີ່ສາມາດເຂົ້າເຖິງໄດ້ງ່າຍ, ຜູ້ສອນສາມາດສ້າງບົດຮຽນທັງໃນຫ້ອງຮຽນ ແລະ ນອກຫ້ອງຮຽນມີປະຕິສຳພັນກັບຜູ້ສອນ, ກັບເພື່ອນຮ່ວມຊັ້ນຮຽນ ແລະ ກັບຄູເຄືອຂ່າຍ ເຊິ່ງມີອົງປະກອບດັ່ງນີ້:

2.1 Web editor & File Manager ຜູ້ສອນສາມາດສ້າງ Folder ຕ່າງ ໆ ໄດ້ແກ່: Course Syllabus, Lesson_1, Lesson_2 … ແລະ Mywebsite ເຊິ່ງສາມາດ upload file ຊະນິດຕ່າງ ໆ ໄດ້ ເຊັ່ນ: ຟາຍຮູບພາບ (Picture), ຟາຍພາບເຄື່ອນໄຫວ (Video, Clip) ລວມທັງຟາຍປະເພດ .html, pdf ເປັນຕົ້ນ.

2.2 ການສ້າງແບບສອບຖາມ (Questionnaire) ຜູ້ສອນສາມາດສ້າງແບບສອບຖາມເອງໄດ້ ຫຼື ນາແບບສອບຖາມສ່ວນກາງມາໃຊ້ ຫຼື ປັບປຸງແກ້ໄຂໄດ້. ໂດຍສາມາດສ້າງໄດ້ທັງແບບເລືອກຕອບ, ແບບເຕີມຄຳ, ແບບຄຳຖາມປາຍເປີດ ແລະ ແບບ Rating Scales ເມື່ອສ້າງສຳເລັດສາມາດນຳມາໃຊ້ ຫຼື ນຳເຂົ້າໄປເປັນແບບສອຖາມກາງໄດ້ດ້ວຍ

2.3 ສ້າງແບບທົດສອບ (Examination) ຜູ້ສອນສາມາດສ້າງແບບທົດສອບເອງໄດ້ ທັງແບບເລືອກຕອບ (Multiple Choice Test), ແບບຈັບຄູ (Matching Test), ແບບທົດສອບຖືກ - ຜິດ (True & False) ແລະ ແບບທົດສອບເຕີມຄຳ (Short Answer).

ນອກຈາກນີ້, ຜູ້ສອນສາມາດເຂົ້າເປັນນັກສຶກສາເພື່ອທົດສອບການພັດທະນາບົດຮຽນຂອງຕົນທີ່ສ້າງຂຶ້ນເຊິ່ງເຂົ້າທີ່ເມນູ Preview ພ້ອມທັງຈັດສັນລະບົບຕ່າງ ໆ ເພີ່ມເຕີມໃນເມນູ Home (ໜ້າຫຼັກ), Introduction (ແຖບສະແດງຄຳອະທິບາຍລາຍວິຊາ, ສັງເຂບລາຍວິຊາ), Statistics (ແຖບສະແດງລາຍຊື່ຜູ້ຮຽນ, ກວດສອບເວລາຮຽນ ແລະ ສະແດງຜົນການຮຽນ), Schedule (ຕາຕະລາງ ແລະ ເວລາຮຽນ), Homework (ບ່ອນສົ່ງວຽກບ້ານ ແລະ ກິດຈະກາອື່ນ ໆ), Webboard (ແຖບຕິດຕໍ່ໂອ້ລົມລະຫວ່າງຜູ້ຮຽນກັບເພື່ອນ, ກັບຜູ້ສອນ ແລະ ຄູເຄືອຂ່າຍ).